ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

25-28 ກໍລະກົດ 2022
ປີທີ 11
ສະບັບທີ 862

## ຮອງປະທານສະພາແຫ່ງຊາດ ສຳເລັດການຢ້ຽມຢາມ ສສ.ຫວຽດນາມ ຢ່າງເປັນທາງການ



ໜ້າ 2

## ສຳເລັດການຮຽບຮຽງກົດໝາຍວ່າດ້ວຍ ຊັບສິນຂອງລັດ (ສະບັບປັບປຸງ)

(ສພຊ) ພາຍຫລັງດຳເນີນມາເປັນເວລາ 2 ວັນ ໃນລະຫວ່າງວັນທີ 18-19 ກໍລະກົດຜ່ານມາ, ທີ່ເມືອງວັງວຽງ ແຂວງວຽງຈັນ, ກອງປະຊຸມຮຽບຮຽງກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ຕາມການປະກອບຄຳເຫັນຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ອັດລົງດ້ວຍຜົນສຳເລັດໄດ້ຕາມລະດັບຄາດໝາຍທີ່ວາງໄວ້ ພາຍໃຕ້ການເປັນປະທານກອງປະຊຸມຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ ປະທານກຳມາທິການກົດໝາຍ ສະພາແຫ່ງຊາດ; ມີທ່ານ ປອ. ລີເບີ ລີບົວປາວ ປະທານກຳມາ



ທິການແຜນການ, ການເງິນ ແລະ ການກວດສອບ, ບັນດາທ່ານຮອງປະທານກຳມາທິການ, ຮອງລັດຖະມົນຕີ, ຄະນະທີ່ປຶກສາທາງດ້ານກົດໝາຍ,

ອ່ານຕໍ່ໜ້າ 2

## ຄະນະ ສສຊ ປະຈຳເຂດເລືອກຕັ້ງ ແລະ ສສຂ ແລກປ່ຽນບົດຮຽນຮ່ວມກັນ





(ສພຊ) ເພື່ອເປັນການແລກປ່ຽນ, ຖອດຖອນບົດຮຽນເຊິ່ງກັນແລະກັນ ລະຫວ່າງຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ (ສສຂ) ໃນການປະສານສົມທົບ ແລະ ການແກ້ໄຂວຽກງານຮ່ວມກັນຕາມພາລະບົດບາດ ໃຫ້ມີຄວາມເປັນເອກະພາບ ແລະ ຄຸນນະພາບດີຂຶ້ນ ແລະ ເພື່ອຍົກສູງຄຸນນະພາບໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ; ໃນລະຫວ່າງວັນທີ 14-15 ກໍລະກົດຜ່ານມາ, ທີ່ນະຄອນໄກສອນພົມວິຫານ ແຂວງສະຫວັນນະເຂດ ກຳມາທິການວຽກງານ

ອ່ານຕໍ່ໜ້າ 7

## ກປຊສ ຕັ້ງໜ້າປະຕິບັດໜ້າທີ່ ວຽກງານຂອງຕົນດ້ວຍຄວາມຮັບຜິດຊອບສູງ



ໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ໃນວັນທີ 23 ມິຖຸນາຜ່ານມາ, ທ່ານ ພົທ. ວົງສັກ ພັນທະວົງ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ໃຫ້ສຳພາດແກ່ສື່ມວນຊົນວ່າ: ນັບແຕ່ກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດທີ IX ຈົນມາຮອດປັດຈຸບັນ, ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ກປຊສ) ໃນຖານະເປັນອົງການເສນາທິການໃຫ້ແກ່ສພຊ ໃນການຈັດຕັ້ງປະຕິບັດ 3 ພາລະບົດບາດຄື: ດ້ານນິຕິບັນຍັດ, ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ດ້ານການຕິດຕາມກວດກາ ໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ຕັ້ງໜ້າປະຕິບັດໜ້າທີ່ວຽກງານຂອງຕົນດ້ວຍຄວາມຮັບຜິດຊອບສູງ ເຊິ່ງ

ອ່ານຕໍ່ໜ້າ 3

## ຫລາຍບັນຫາສຳຄັນ ຖືກນຳເຂົ້າໃນກອງປະຊຸມ ສະໄໝສາມັນເທື່ອທີ 3 ຂອງ ສປນວ ຊຸດທີ II





(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນນະຄອນຫລວງວຽງຈັນ (ສປນວ) ຊຸດທີ II ໄດ້ດຳເນີນຂຶ້ນຢ່າງເປັນທາງການ ໃນລະຫວ່າງວັນທີ 21-26 ກໍລະກົດ 2022 ທີ່ຫ້ອງປະຊຸມສຳນັກງານອົງການປົກຄອງນະຄອນຫລວງວຽງຈັນ ໂດຍການເປັນປະທານຂອງທ່ານ ອານຸພາບ ຕຸນາລົມ ຄະນະເລຂາທິການສູນກາງພັກ, ເລຂາຄະນະພັກ

ອ່ານຕໍ່ໜ້າ 8

## ກກຂພ ຄົ້ນຄວ້າ, ປະກອບຄຳເຫັນໃສ່ຮ່າງເອກະສານສຳຄັນ

(ສພຊ) ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຍັງມີຫລາຍບັນຫາທີ່ເລັ່ງທວງໃຫ້ຕ້ອງໄດ້ກວດກາ ແລະ ປັບປຸງໃຫ້ດີກວ່າເກົ່າ ເພື່ອເຮັດໃຫ້ການສ້າງລັດທີ່ປົກຄອງດ້ວຍກົດໝາຍມີຄວາມເຂັ້ມແຂງ, ມີຄວາມສຳຄັນ ແລະ ມີຄວາມຈຳເປັນ ທີ່ຈະຕ້ອງໄດ້ດຳເນີນການປະເມີນການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດຕ່າງໆ ເພື່ອເຮັດໃຫ້ການສ້າງ, ການປັບປຸງ ແລະ ການປະຕິບັດກົດໝາຍ ມີຄວາມຖືກຕ້ອງ, ສອດຄ່ອງ, ຮັດກຸມ, ເຂັ້ມງວດ, ສັກສິດ ແລະ ເພື່ອຄວາມເປັນເອກະພາບໃນການປະຕິບັດພາລະບົດບາດຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂອງສະພາ



ແຫ່ງຊາດ; ສະນັ້ນ, ໃນລະຫວ່າງວັນທີ 19-22 ກໍລະກົດ 2022 ກຳມາທິການກົດໝາຍ (ກກຂພ) ໄດ້ຈັດກອງປະຊຸມທາງດ້ານວິຊາການ ໂດຍການເປັນປະທານຂອງທ່ານ ອຳໄພ ຈິດມານົນ ຮອງປະທານກຳມາທິການກົດ

ອ່ານຕໍ່ໜ້າ 3



ໜ້າ 4



ໜ້າ 4



ໜ້າ 4





ໜ້າ 7



ໜ້າ 5



ໜ້າ 5



## ຮອງປະທານ...

(ສພຊ) ໂດຍຕອບສະໜອງຕາມຄຳເຊີນຂອງສະຫາຍ ເຈີນ ແທ່ງ ເໜີ້ນ ກຳມະການກົມການເມືອງສູນກາງພັກ, ຮອງປະທານສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ, ປະທານຄະນະມິດຕະພາບລັດຖະສະພາຫວຽດນາມ-ລາວ, ໃນລະຫວ່າງວັນທີ 19-22 ກໍລະກົດ 2022, ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານຄະນະມິດຕະພາບລັດຖະສະພາລາວ-ຫວຽດນາມ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດລາວ ໄດ້ສຳເລັດການເດີນທາງຢ້ຽມຢາມ ສສ.ຫວຽດນາມ ຢ່າງເປັນທາງການ. ການຢ້ຽມຢາມໃນຄັ້ງນີ້ມີຂຶ້ນໃນບັນຍາກາດທີ່ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ພວມມີການສະເຫລີມສະຫລອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ-ລາວ ຄື: ວັນຄົບຮອບ 60 ປີ ແຫ່ງການສ້າງຕັ້ງສາຍພົວພັນການທູດ ແລະ 45 ປີ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື.

ໃນວັນທີ 19 ກໍລະກົດ 2022 ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານຄະນະມິດຕະພາບລັດຖະສະພາລາວ-ຫວຽດນາມ ພ້ອມດ້ວຍຄະນະ ໄດ້ພົບປະສອງຝ່າຍກັບຄະນະນຳຂອງສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ເຊິ່ງນຳໂດຍສະຫາຍ ເຈີນ ແທ່ງ ເໜີ້ນ ກຳມະການກົມການເມືອງສູນກາງພັກ, ຮອງປະທານສະພາແຫ່ງຊາດ ຜູ້ປະຈຳການ, ປະທານຄະນະມິດຕະພາບລັດຖະສະພາຫວຽດນາມ-ລາວ. ການພົບປະໃນຄັ້ງນີ້ ເຕັມໄປດ້ວຍບັນຍາກາດແຫ່ງໄມຕີຈິດສະໜິດສະໜົມຖານອ້າຍນ້ອງ ເຊິ່ງທັງສອງຝ່າຍໄດ້ແຈ້ງໃຫ້ກັນ ຊາບສະພາບການພົ້ນເດັ່ນຂອງທັງສອງປະເທດ, ຕີລາຄາສູງຕໍ່ຜົນພົວພັນຮ່ວມມືແບບພິເສດ ລະຫວ່າງ ສອງພັກ ສອງລັດ ກໍຄືສອງອົງການນິຕິບັນຍັດ ລາວ-ຫວຽດນາມ ໃນໄລຍະທີ່ຜ່ານມາ ແລະ ແລກປ່ຽນບົດຮຽນການຊີ້ນຳ-ນຳພາ ຂອງຄະນະພັກຂອງສອງສະພາແຫ່ງຊາດ, ບົດຮຽນກ່ຽວກັບວຽກງານສະມາຊິກສະພາແຫ່ງຊາດ ການພົວພັນລະຫວ່າງສະພາແຫ່ງຊາດ ແລະສະພາປະຊາຊົນທ້ອງຖິ່ນ ກໍຄືການພົວພັນລະຫວ່າງຄະນະເລຂາທິການ ແລະ ຫ້ອງວ່າການສະພາແຫ່ງຊາດຫວຽດນາມ, ວຽກງານການເຄື່ອນໄຫວຕ່າງປະເທດຂອງສະພາແຫ່ງຊາດໃນຕໍ່ໜ້າ.

ໃນໄລຍະຢ້ຽມຢາມ, ຄະນະໄດ້ເຂົ້າຢ້ຽມຂ່ຳນັບສະຫາຍ ເວືອງ ດິງ ເຫວະ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດແຫ່ງ ສສ.ຫວຽດນາມ ເຊິ່ງສະຫາຍໄດ້ຕີລາຄາສູງຕໍ່ການຢ້ຽມຢາມຫວຽດນາມຂອງຄະນະໃນຄັ້ງນີ້, ເພາະພໍດີກັບໄລຍະທີ່ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ພວມສະເຫລີມສະຫລອງປີສາມັກຄີມິດຕະພາບລາວ-ຫວຽດນາມ-ລາວ. ສະຫາຍປະທານສະພາແຫ່ງຊາດຫວຽດນາມໄດ້ຕີລາຄາສູງການພົວພັນຮ່ວມມືລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ເວົ້າລວມ, ເວົ້າສະເພາະ ລະຫວ່າງ ສອງອົງການນິຕິບັນຍັດ ຫວຽດນາມ-ລາວ ແລະໄດ້ສະເໜີໃຫ້ສອງສະພາສືບຕໍ່ເສີມຂະຫຍາຍສາຍພົວພັນຮ່ວມມື ລະຫວ່າງສອງອົງການໃນຕໍ່ໜ້າ.

ນອກຈາກເຄື່ອນໄຫວຢູ່ນະຄອນຫລວງຮ່າໂນ້ຍແລ້ວ, ຄະນະຍັງໄດ້ຢ້ຽມຢາມ ແລະ ເຮັດວຽກ ກັບຄະນະພັກ, ຄະນະນຳ ຂອງແຂວງ ທ້າຍ ງວຽນ, ພິເສດຍັງໄດ້ເຂົ້າຮ່ວມ ແລະ ກ່າວຄຳເຫັນໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງ ທ້າຍ ງວຽນ ຊຸດທີ 14. ຄະນະ ຍັງໄດ້ເດີນທາງໄປຢ້ຽມຊົມສະຫະກອນຜະລິດຊາຫາວດາດ ໃນເມືອງເຕີນເກືອງ ທີ່ມີຊື່ສຽງໃນການຜະລິດຊາ ຂອງແຂວງ ທ້າຍ ງວຽນ ແລະ ຢ້ຽມຢາມມະຫາວິທະຍາໄລ ທ້າຍ ງວຽນ, ມີຄຳເຫັນຕໍ່ບັນດາຄູອາຈານ ແລະ ບັນດານັກສຶກສາລາວ-ຫວຽດນາມ ເຊິ່ງປັດຈຸບັນມີນັກສຶກສາຮຽນຢູ່ເກືອບ 60 ຄົນ.

ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ພ້ອມດ້ວຍຄະນະ ຍັງໄດ້ຢ້ຽມຢາມແຂວງຮວາບິງ ໄດ້ເຂົ້າຢ້ຽມຊົມອານຸສອນສະຖານ ເຊິ່ງເປັນສະຖານທີ່ປະຫວັດສາດຕິດພັນກັບການປະຕິວັດຂອງສອງຊາດ ລາວ-ຫວຽດນາມ, ເປັນສະຖານທີ່ກະກຽມໃຫ້ແກ່ການຈັດກອງປະຊຸມໃຫຍ່ ຄັ້ງທີ 2 ຂອງພັກປະຊາຊົນລາວ ໃນທ້າຍປີ 1971 ແລະ ປັດຈຸບັນພວມມີການປັບປຸງກໍ່ສ້າງໃຫ້ເປັນສະຖານທີ່ສຶກສາອົບຮົມ ໃຫ້ປະຊາຊົນ ແລະ ຄົນລຸ້ນໜຸ່ມຂອງສອງຊາດ ກ່ຽວກັບມູນເຊື້ອຂອງການພົວພັນພິເສດ ລາວ-ຫວຽດນາມ. ຄະນະ ໄດ້ພົບປະເຮັດວຽກກັບເລຂາຄະນະພັກ, ປະທານສະພາປະຊາຊົນຂອງແຂວງ, ປະທານກຳມາທິການປະຊາຊົນແຂວງ ແລະ ການນຳຂັ້ນຕ່າງໆຂອງແຂວງ ໄດ້ໄປຢ້ຽມຊົມສະຖານທີ່ທ່ອງທ່ຽວບໍ່ນ້ຳຮ້ອນກິມໂບຍ ທີ່ມີຊື່ສຽງຂອງແຂວງ.

ໃນການພົບປະການນຳຂອງແຂວງ ທ້າຍ ງວຽນ ແລະ ຮົວບິ່ງ ສອງຝ່າຍ ໄດ້ຕີລາຄາສູງການພົວພັນຮ່ວມມື, ຊ່ວຍເຫລືອເຊິ່ງກັນແລະກັນ ໃນຕະຫລອດໄລຍະແຫ່ງການຕໍ່ສູ້ກູ້ຊາດ ແລະ ໄລຍະແຫ່ງການປົກປັກຮັກສາ ແລະ ສ້າງສາປະເທດຊາດ ຂອງຕົນໃນປັດຈຸບັນ, ໄດ້ເປັນເອກະພາບຮ່ວມກັນສືບຕໍ່ເສີມຂະຫຍາຍສາຍພົວພັນພິເສດ ໃຫ້ນັບມື້ນັບມີປະສິດທິຜົນຍິ່ງຂຶ້ນ.

ການມາຢ້ຽມຢາມຂອງສະຫາຍຮອງປະທານສະພາໃນຄັ້ງນີ້, ໄດ້ປະສົບຜົນສຳເລັດຢ່າງຈົບງາມ ເປັນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່ ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ເວົ້າລວມ, ເວົ້າສະເພາະ ສອງອົງການ ໃຫ້ນັບມື້ນັບແໜ້ນແຟ້ນ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

# ເລື່ອງເດັ່ນ, ຂ່າວເດັດ

**# ຄັດໂດຍ: ທອມສະນິດ**

*❑ ອີງຕາມຂໍ້ມູນ ຈາກອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ ໃຫ້ຮູ້ວ່າ: ຮອດປີ 2030 ແຂວງສະຫວັນນະເຂດ ຈະມີອັດຕາສ່ວນປະຊາກອນໃນໄວເຮັດວຽກຫລາຍທີ່ສຸດ (ໄວອາຍຸ 15-64 ປີ) ແລະ ຈະສາມາດເພີ່ມຜົນປະໂຫຍດດ້ານເສດຖະກິດໄດ້ຫລາຍຈາກການມີປະຊາກອນໃນເກນອາຍຸເຮັດວຽກ ຖ້າຮັບປະກັນໃຫ້ທຸກຄົນມີສຸຂະພາບແຂງແຮງ, ມີການສຶກສາ, ມີບົດບາດຢ່າງເຕັມສ່ວນ ແລະ ໄດ້ຮັບການສ້າງຄວາມເຂັ້ມແຂງ.*

***ນສພ. ວຽງຈັນໃໝ່ 25/07/2022***

*❑ ສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫລວງວຽງຈັນ ໄດ້ຈັດງານຕະຫລາດນັດ ເພື່ອສຸຂະພາບ ແລະ ຄວາມງາມຂຶ້ນ ໃນລະຫວ່າງວັນທີ 23-31 ກໍລະກົດ 2022 ທີ່ສູນການຄ້າ ລາວ-ໄອເຕັກ (ຕຶກເກົ່າ) ນະຄອນຫລວງວຽງຈັນ. ພາຍໃນງານຈະມີຫລາຍກິດຈະກຳທີ່ໜ້າສົນໃຈ, ມີສິນຄ້າຫລາກຫລາຍໃຫ້ທ່ຽວຊົມ ແລະ ໃຊ້ບໍລິການ; ພ້ອມນີ້, ພາຍໃນງານຍັງມີກິດຈະກຳອອກກຳລັງກາຍຖີບລົດ, ແລ່ນເຄື່ອງແລ່ນ (ຟຣີ), ເຕັ້ນແອໂລບິກ ແລະ ຊູມບາ ໃນວັນທີ 25, 26, 28 ແລະ 29 ເວລາ: 17:30-18:30 ໂມງ (ຟຣີ), ຫລິ້ນໂຢຄະ (ຟຣີ) ໃນວັນທີ 27 ເວລາ 17:30-18:30 ໂມງ ເພື່ອເປັນຂະບວນຝຶກຝົນ, ສຸຂະພາບແຂງແຮງ ແລະ ໄດ້ຄວາມສາມັກຄີຮ່ວມກັນ. ນອກນັ້ນ, ຍັງມີການຕັດຜົມຊາຍ (ຟຣີ) ແລະ ກິດຈະກຳອື່ນໆພາຍໃນງານເຊັ່ນ: ນັ່ງກິນອາຫານ-ຟັງເພງ ເລີ່ມເວລາ 16:00-20:00 ໂມງ.*

***ນສພ. ປະເທດລາວ 25/07/2022***

*❑ ນັບຕັ້ງແຕ່ ສປປລາວ ໄດ້ໃຫ້ສັດຕະຍາບັນສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (CEDAW) ໃນປີ 1981, ລັດຖະບານລາວ ໄດ້ໃຫ້ຄວາມສຳຄັນ ແລະ ໝາຍໝັ້ນຕໍ່ການຈັດຕັ້ງປະຕິບັດສົນທິສັນຍາດັ່ງກ່າວ ໂດຍການຜັນຂະຫຍາຍເປັນລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງລາວ ພ້ອມທັງສ້າງກົນໄກແຫ່ງຊາດ ເພື່ອປະສານງານ ເຊັ່ນ: ຄຊກມດ ເພື່ອຕິດຕາມ ແລະ ລາຍງານການປະຕິບັດສົນທິສັນຍາ, ເພື່ອຮັບປະກັນການຊຸກຍູ້ຄວາມສະເໝີພາບທາງເພດ, ສະກັດກັ້ນທຸກຮູບການຈຳແນກຕໍ່ແມ່ຍິງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງໃນ ສປປລາວ.*

***ນສພ. ປະເທດລາວ 26/07/2022***

## ສຳເລັດ...



ຫົວໜ້າ-ຮອງຫົວໜ້າກົມ, ຫົວໜ້າ-ຮອງຫົວໜ້າພະແນກ ແລະ ວິຊາການຂອງສະພາແຫ່ງຊາດ, ກະຊວງການເງິນ, ກະຊວງຍຸຕິທຳ, ຫ້ອງວ່າການປະທານປະເທດ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທັງນີ້, ກໍເພື່ອຄົ້ນຄວ້າ ແລະ ຮຽບຮຽງເນື້ອໃນ ຂອງກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ຕາມການປະກອບຄຳເຫັນຂອງບັນດາສະມາຊິກສະພາແຫ່ງຊາດ ໃນວາລະກອງປະຊຸມເມື່ອວັນທີ 1 ກໍລະກົດ 2022 ເຊິ່ງມີຜູ້ປະກອບຄຳເຫັນ ທັງໝົດ 44 ທ່ານ ແລະ ສົ່ງເອກະສານປະກອບຄຳເຫັນ ຈຳນວນ 15 ທ່ານ ກວມເອົາ 36 ມາດຕາ, 98 ເນື້ອໃນ ແລະ ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 7 ກໍລະກົດ 2022 ລົງຄະແນນສຽງຮັບຮອງເອົາ ໂດຍມີສະມາຊິກສະພາແຫ່ງຊາດ ເຂົ້າຮ່ວມ 155 ທ່ານ, ເຫັນດີ 138 ທ່ານ ເທົ່າກັບ 89,03%, ບໍ່ເຫັນດີ 15 ທ່ານ ເທົ່າກັບ 9,67%, ບໍ່ອອກສຽງ 2 ທ່ານ ເທົ່າກັບ 1,29%.

ກອງປະຊຸມ ໄດ້ພ້ອມກັນຄົ້ນຄວ້າບັນດາຄຳເຫັນຂອງສະມາຊິກສະພາແຫ່ງຊາດ ທີ່ກວມເອົາ 36 ມາດຕາ, 98 ເນື້ອໃນ ທີ່ເຫັນວ່າມີເຫດມີຜົນ ນຳມາປັບປຸງໃສ່ກົດໝາຍດັ່ງກ່າວ ໂດຍສະເພາະແມ່ນມາດຕາ 24 ການຫັນຊັບເປັນທຶນ ແລະ ມາດຕາ 28 ການຂາຍຮຸ້ນ ຫລື ຖອນຮຸ້ນ ເຊິ່ງສອງມາດຕານີ້ ບັນດາທ່ານສະມາຊິກສະພາແຫ່ງຊາດ ກໍຄືບັນດາທ່ານຄະນະປະຈຳສະພາແຫ່ງຊາດ ໃຫ້ຄວາມສົນໃຈ ແລະ ມີຄວາມເປັນຫ່ວງຫລາຍ ກອງປະຊຸມໄດ້ພ້ອມກັນຄົ້ນຄວ້າ ແລະ ພິຈາລະນາຢ່າງເລິກເຊິ່ງ ແນໃສ່ເຮັດໃຫ້ເນື້ອໃນຂອງກົດໝາຍມີຄວາມຄົບຖ້ວນ, ສົມບູນ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດຜົນ ເພື່ອໃຫ້ປະທານປະເທດລົງນາມເປັນກົດໝາຍ ແລະ ບັງຄັບໃຊ້ຢ່າງເປັນທາງການໃນຂັ້ນຕອນຕໍ່ໄປ.

(ນາງ ປາກາລັກ ພົມມີໄຊ)

## ກປຊສ...

ສາມາດຍາດໄດ້ ຜົນງານຈຳນວນໜຶ່ງທີ່ພົ້ນເດັ່ນດັ່ງນີ້:

ດ້ານນິຕິບັນຍັດ: ໄດ້ສົມທົບກັບບັນດາກະຊວງ, ອົງການ ແລະ ກຳມາທິການທີ່ກ່ຽວຂ້ອງ ຂອງ ສພຊ ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ຈຳນວນໜຶ່ງ ເຊັ່ນ: ໄດ້ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ ທີ່ຕິດພັນກັບວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ເປັນຕົ້ນ ກົດໝາຍວ່າດ້ວຍຢາເສບຕິດ ໄດ້ປັບປຸງຄືນໃໝ່ 11 ມາດຕາ, ນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງ ສພຊ ຊຸດທີ IX, ປັດຈຸບັນປະທານປະເທດ ໄດ້ອອກລັດຖະດຳລັດເລກທີ 227/ປປທ, ລົງວັນທີ 06 ທັນວາ 2021 ປະກາດນຳໃຊ້; ພ້ອມນີ້, ໄດ້ຊຸກຍູ້ກະຊວງທີ່ກ່ຽວຂ້ອງປັບປຸງນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງກັບຢາເສບຕິດ ໄດ້ທັງໝົດ 11 ນິຕິກຳ; ນອກນີ້, ກໍໄດ້ປະກອບສ່ວນໃນການສ້າງ ແລະ ປັບປຸງກົດໝາຍໃນຂົງເຂດອື່ນ ໄດ້ຈຳນວນ 12 ສະບັບ (ສ້າງໃໝ່ 4 ສະບັບ ແລະ ປັບປຸງ 8 ສະບັບ) ໂດຍນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝວິສາມັນເທື່ອທີ 1, ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ໃນໄລຍະຜ່ານມາ ແລະ ໄດ້ສະເໜີປະທານປະເທດອອກລັດຖະດຳລັດປະກາດນຳໃຊ້; ພ້ອມນີ້, ໄດ້ສົມທົບກັບກະຊວງທີ່ກ່ຽວຂ້ອງ ແລະ ກຳມາທິການກົດໝາຍ ສພຊ ຄົ້ນຄວ້າສ້າງຮ່າງກົດໝາຍ ວ່າດ້ວຍການຄຸ້ມຄອງອາວຸດ ແລະ ທາດລະເບີດ ເຊິ່ງແມ່ນກົດໝາຍສ້າງໃໝ່ ແລະ ໄດ້ສຳເລັດໃນການທາບທາມຈາກອົງການຈັດຕັ້ງຕ່າງໆໃນທົ່ວສັງຄົມຕໍ່ຮ່າງກົດໝາຍດັ່ງກ່າວ.

ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ: ໄດ້ສົມທົບກັບກະຊວງ, ອົງການທີ່ກ່ຽວຂ້ອງຄົ້ນຄ້ວາເນື້ອໃນວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດຂອງລັດຖະບານ ນຳເຂົ້າພິຈາລະນາຢູ່ໃນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງ ສພຊ ຊຸດທີ IX ແລະ ສພຊ ໄດ້ອອກມະຕິເລກທີ 04/ສພຊ, ລົງວັນທີ 10/08/2021 ຮັບຮອງເອົາຢ່າງເປັນທາງການ; ໄດ້ຄົ້ນຄວ້າພິຈາລະນາການສະເໜີ ຂອງປະທານສະຫະພັນນັກຮົບເກົ່າແຫ່ງຊາດລາວກ່ຽວກັບການຂໍຍົກເວັ້ນມາດຕາ 20 ຂອງກົດໝາຍວ່າດ້ວຍສະຫະພັນນັກຮົບເກົ່າລາວ ເພື່ອດຳເນີນກອງປະຊຸມໃຫຍ່ເລືອກຕັ້ງຄະນະບໍລິຫານງານສະຫະພັນນັກ ຮົບເກົ່າລາວ ໃນເງື່ອນໄຂການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ສະເໜີໃຫ້ຄະນະປະຈຳສະພາແຫ່ງຊາດ ອອກມະຕິ ຕົກລົງອະນຸມັດ, ຕາມມະຕິເລກທີ 222/ຄປຈ, ລົງວັນທີ 03/09/2021; ພ້ອມນີ້, ກໍໄດ້ປະກອບສ່ວນໃນການຄົ້ນຄວ້າ, ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດໃນຂົງເຂດອື່ນ ໂດຍສະເພາະແມ່ນຂົງເຂດເສດຖະກິດ-ສັງຄົມ-ຍຸຕິທຳ ທີ່ໄດ້ນຳມາພິຈາລະນາໃນປະຊຸມຄະນະປະຈຳສະພາແຫ່ງຊາດໃນໄລຍະທີ່ບໍ່ໄດ້ດຳເນີນກອງປະຊຸມສະພາແຫ່ງຊາດ ໄດ້ຈຳນວນ 100 ກວ່າເລື່ອງ ແລະ ສາມາດທັນເປັນມະຕິຂອງຄະນະປະຈຳສະພາແຫ່ງຊາດໄດ້ຈຳນວນ 30 ກວ່າສະບັບ.

ດ້ານການຕິດຕາມກວດກາ: ໂດຍປະຕິບັດພາລະບົດບາດຂອງຕົນ, ກປຊສ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດພາລະບົດຕິດ ຕາມກວດກາຕາມແຜນການໃນປີ 2021 ທີ່ວາງໄວ້, ອັນພົ້ນເດັ່ນແມ່ນໄດ້ລົງຕິດຕາມກວດກາຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດຂອງລັດຖະບານ ຢູ່ທ້ອງຖິ່ນຕ່າງໆ 17 ແຂວງ, 1 ນະຄອນຫລວງ ໂດຍແບ່ງຂັ້ນຮັບຜິດຊອບ ລະຫວ່າງຄະນະນຳ ກປຊສ ກັບບັນດາກຳມະການ ທີ່ສັງກັດ ກປຊສ ທີ່ເປັນສະມາຊິກສະພາແຫ່ງຊາດ ປະຈຳຢູ່ແຕ່ລະເຂດເລືອກຕັ້ງ ເປັນເຈົ້າການຈັດຕັ້ງປະຕິບັດໃນການລົງຕິດຕາມກວດກາຢູ່ທ້ອງຖິ່ນຂອງຕົນ ເຊິ່ງຜ່ານ ການຕິດຕາມກວດກາຕາມມະຕິຂອງສະພາແຫ່ງຊາດ ເລກທີ 04 /ສພຊ, ລົງວັນທີ 10/08/2021 ສາມາດສະຫລຸບໄດ້ວ່າ ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດຂອງລັດຖະບານແຕ່ປີ 2021-2023 ໃນໄລຍະທີ I ແຕ່ເດືອນ 9/2021-ເດືອນ 5/2022, ເຫັນວ່າ 6 ແຜນວຽກຈຸດສຸມທີ່ກຳນົດໄວ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີຜົນຄືບໜ້າພໍສົມຄວນ ແລະ ໄດ້ດຳເນີນໄປຢ່າງຖືກຕ້ອງ ຕາມທິດຊີ້ນຳຂອງກົມການເມືອງສູນກາງພັກ, ມະຕິຂອງກອງປະຊຸມສະພາແຫ່ງຊາດ; ພ້ອມນີ້, ປະຊາຊົນບັນດາເຜົ່າ ແລະ ທຸກຊັ້ນຄົນໃນສັງຄົມ ໄດ້ໃຫ້ການສະໜັບສະໜູນ, ຮັບຮູ້ ແລະ ເຂົ້າໃຈເຫັນໄດ້ຄວາມຈຳເປັນໃນການຍົກລະດັບການແກ້ໄຂບັນຫາຢາເສບຕິດເປັນວາລະແຫ່ງຊາດ ແລະ ເຂົ້າຮ່ວມຢ່າງຂະບວນການກວ້າງຂວາງ; ຄະນະພັກ-ຄະນະນຳແຕ່ລະຂັ້ນ, ພາກສ່ວນເຈົ້າໜ້າທີ່ກ່ຽວຂ້ອງ ໄດ້ເພີ່ມທະວີຄວາມຮັບຜິດຊອບ ແລະ ຄວາມສາມາດຂອງຕົນສູງຂຶ້ນ ຕໍ່ການແກ້ໄຂບັນຫາຢາເສບຕິດ ໃນຂອບເຂດຕົນເອງຮັບຜິດຊອບ. ໂດຍຜ່ານການປະຕິບັດຕົວຈິງສາມາດແກ້ໄຂມ້າງລາຍຄະດີຢາເສບຕິດໄດ້ຢ່າງຫລວງຫລາຍ, ເຮັດໃຫ້ກຸ່ມເສບ ແລະ ຂົນສົ່ງ-ຄ້າຂາຍ ຢາເສບຕິດມີຄວາມຢ້ານກົວຈຳນວນໜຶ່ງໄດ້ຢຸດເຊົາ; ບັນດາປະເທດເພື່ອນມິດ, ສາກົນໄດ້ໃຫ້ການສະໜັບສະໜູນ, ຊ່ວຍເຫລືອ ແລະ ຮ່ວມມືຢ່າງແໜ້ນແຟ້ນ ອັນເປັນການປະກອບ ສ່ວນສຳຄັນເຂົ້າໃນການຮັກສາສະຖຽນລະພາບທາງການເມືອງ, ຄວາມສະຫງົບປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ໄດ້ຢ່າງໜັກແໜ້ນ, ສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງປະເທດຊາດພວກເຮົາ; ໄດ້ລົງຕິດຕາມກວດກາເກັບຂໍ້ມູນຢູ່ບັນດາອົງການ, ຂະແໜງການຕ່າງໆທີ່ກ່ຽວຂ້ອງພົວພັນເຖິງການຄົ້ນຄວ້າແກ້ໄຂຄຳຮ້ອງຂໍຄວາມເປັນທຳ ໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ແກ້ໄຂໄດ້ທັງໝົດ 5 ເລື່ອງ; ພ້ອມນີ້, ໄດ້ພົບປະ, ຮັບຕ້ອນພະນັກງານທະຫານ, ຕຳຫລວດ ແລະ ພໍ່ແມ່ປະຊາຊົນ ທີ່ເຂົ້າມາສະເໜີຄວາມຂັດຂ້ອງໜອງໃຈທີ່ພົວພັນເຖິງຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ 12 ເທື່ອຄົນ; ພ້ອມນັ້ນ, ຍັງໄດ້ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ການປະຕິບັດໜ້າທີ່ການເມືອງ ຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ຂັ້ນຮາກຖານກົມກອງຕື່ມອີກ.

ຜ່ານຈາກການຈັດຕັ້ງປະຕິບັດ 3 ພາລະບົດບາດ ກຳມາທິການຍັງພົບຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກດັ່ງນີ້:

❖ ຂໍ້ສະດວກ:

1. ມີແນວທາງ, ແຜນນະໂຍບາຍຂອງພັກ, ກົດໝາຍ ແລະ ນິຕິກຳຕ່າງໆຂອງລັດ, ມະຕິຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ທິດທາງແຜນການວຽກງານຂອງກຳມາທິການ ເປັນບ່ອນອີງ ແລະ ເປັນຄາດໝາຍສູ້ຊົນ ໃນການຈັດຕັ້ງປະຕິບັດ;

2. ໄດ້ຮັບການຊີ້ນຳຈາກຄະນະປະຈຳສະພາແຫ່ງຊາດ ຢ່າງເປັນປົກກະຕິ; ພ້ອມທັງໄດ້ຮັບການຮ່ວມມື, ປະສານງານ ຈາກອົງການຈັດຕັ້ງພາຍໃນ ສພຊ, ສະພາປະຊາຊົນຂັ້ນແຂວງ, ບັນດາກະຊວງ, ອົງການ ຂັ້ນສູນກາງ ແລະ ຂະແໜງການຕ່າງໆຂັ້ນທ້ອງຖິ່ນເປັນຢ່າງດີ;

3. ກປຊສ ມີກຳມະການຂອງຕົນ ທີ່ເປັນສະມາຊິກສະພາແຫ່ງຊາດ ປະຈຳຢູ່ແຕ່ລະເຂດເລືອກຕັ້ງທົ່ວປະເທດ (17 ແຂວງ, 1 ນະຄອນຫລວງ) ຈຳນວນ 29 ທ່ານ ເຮັດໃຫ້ມີຄວາມສະດວກໃນການແບ່ງງານ ກໍຄືປະສານງານ ແລະ ການເຄື່ອນໄຫວວຽກງານຂອງກຳມາທິການ ຢູ່ແຕ່ລະທ້ອງຖິ່ນ. ພ້ອມນີ້, ຍັງມີ 2 ກົມວິຊາການຊ່ວຍວຽກ, ມີພະນັກງານວິຊາການພຽງພໍ ແລະ ມີຄວາມສາມາດໃນການເປັນເສນາທິການຊ່ວຍກຳມາທິການເຮັດສຳເລັດໜ້າທີ່ ເປັນຢ່າງດີ;

4. ພາຍໃນຄະນະກຳມາທິການ ມີຄວາມສາມັກຄີເປັນເອກະພາບສູງ ໃນການຄົ້ນຄວ້າ ແລະ ຕົກລົງບັນຫາຕ່າງໆ ຂອງກຳມາທິການຢ່າງເປັນໝູ່ຄະນະ; ມີການແບ່ງປັນມອບໝາຍໜ້າທີ່ໃຫ້ບຸກຄົນຮັບຜິດຊອບ ແລະ ມີການການຊີ້ນຳ-ນຳພາ ຢ່າງລວມສູນ ແລະ ແທດເຖິງວຽກງານຕົວຈິງແຕ່ລະດ້ານ.

❖ ຂໍ້ຫຍຸ້ງຍາກ:

1. ການສ້າງ ແລະ ປັບປຸງກົດໝາຍ ຂອງບັນດາກະຊວງທີ່ກ່ຽວຂ້ອງ ຍັງບໍ່ທັນເຊີນວິຊາການຂອງກຳມາທິການເຂົ້າຮ່ວມແຕ່ຫົວທີ ເຮັດໃຫ້ຂາດການປະສານງານ ແລະ ຄວາມເປັນເອກະພາບທາງດ້ານໂຄງປະກອບ, ເນື້ອໃນຂອງຮ່າງກົດໝາຍແຕ່ຫົວທີ ພົບຄວາມຫຍຸ້ງຍາກ;

2. ການພິຈາລະນາ, ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ເຫັນວ່າການສະໜອງຂໍ້ມູນຈາກອົງການທີ່ກ່ຽວຂ້ອງທາງເບື້ອງລັດ ຍັງບໍ່ທັນຊັດເຈນ, ການນຳສົ່ງເອກະສານຍັງຊັກຊ້າ, ວິຊາການທີ່ເປັນເສນາທິການໃຫ້ແກ່ກຳມາທິການ ຍັງບໍ່ທັນເກັບກຳຂໍ້ມູນໄດ້ຢ່າງລະອຽດ ແລະ ການຄົ້ນຄ້ວາ, ວິເຄາະ, ວິໄຈບັນຫາຍັງບໍ່ທັນເລິກເຊິ່ງ ເຮັດໃຫ້ຄຸນນະພາບໃນການປະກອບຄຳເຫັນຕໍ່ບາງເນື້ອໃນບໍ່ທັນມີປະສິດທິຜົນເທົ່າທີ່ຄວນ;

3. ການຕິດຕາມກວດກາ ເຫັນວ່າບໍ່ທັນປະຕິບັດໄດ້ຕາມແຜນການທີ່ວາງໄວ້ ຍ້ອນໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19, ສ່ວນຫລາຍແມ່ນອີງໃສ່ບົດລາຍງານຂອງພາກສ່ວນທີ່ກ່ຽວຂ້ອງເປັນຫລັກເຮັດໃຫ້ປະສິດທິຜົນຍັງບໍ່ທັນສູງ; ການຄົ້ນຄວ້າແກ້ໄຂຄຳຮ້ອງຂໍຄວາມເປັນທຳ, ການແກ້ໄຂສາຍດ່ວນຂອງປະຊາຊົນ ແມ່ນປະຕິບັດຕາມກົນໄກເຂົ້າ-ອອກປະຕູດຽວ ເຮັດໃຫ້ການຕິດຕາມກວດກາຄວາມຄືບໜ້າ ແລະ ຜົນຂອງການແກ້ໄຂ ທີ່ພົວພັນເຖິງຄວາມຮັບຜິດຊອບຂອງກຳມາທິການ ພົບຄວາມຫຍຸ້ງຍາກ;

4. ການລະບາດຂອງພະຍາດໂຄວິດ-19 ແກ່ຍາວ ເຮັດໃຫ້ການເຄື່ອນໄຫວປະຕິບັດແຜນການວຽກງານ ມີບາງດ້ານຖືກຈຳກັດ. ພ້ອມນີ້, ການສະໜອງດ້ານອຸປະກອນ-ເຕັກນິກບໍ່ທັນຕອບສະໜອງໄດ້ຕາມຄວາມຕ້ອງການ ໃຫ້ແກ່ເຄື່ອນໄຫວວຽກງານ ກໍຄືການດຳລົງຊີວິດປົກກະຕິແບບໃໝ່.

ທ່ານຍັງໄດ້ກ່າວຕື່ມອີກວ່າ: ໃນຕໍ່ໜ້າກຳມາທິການ ຈະສູ້ຊົນສຸມໃສ່ຈັດຕັ້ງປະຕິບັດບັນດາເປົ້າໝາຍລວມ ດັ່ງນີ້:

1. ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍ ແລະ ຫັນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ເປັນແຜນການອັນລະອຽດຂອງກຳມາທິການຕົນ ແລະ ນຳພາຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ ແລະ ມີຄຸນນະພາບ;

2. ຍົກສູງຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ການເມືອງຂອງຄະນະກຳມາທິການ, ກຳມະການສັງກັດກຳມາທິການ ແລະ ພະນັກງານວິຊາການທີ່ເປັນເສນາທິການ ໃນການຄົ້ນຄ້ວາ, ວິເຄາະ, ວິໄຈ ແລະ ການນຳໃຊ້ຜົນຂອງການຄົ້ນຄ້ວາວິທະຍາສາດເຂົ້າໃນການປະກອບຄຳຄິດຄຳເຫັນ, ການຮ່າງເອກະສານສຳຄັນ, ການສ້າງ ແລະ ປັບປຸງກົດໝາຍ, ການພິຈາລະນາຮັບຮອງບັນຫາສຳຄັນພື້ນຖານຂອງຊາດຢູ່ໃນກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ກົດໝາຍກຳນົດ;

3. ເພີ່ມທະວີໃນການຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງເຜີຍແຜ່ແນະນຳ ແລະ ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ນັບທັງການປະຕິບັດໜ້າທີ່ການເມືອງຂອງກຳລັງປະກອບອາວຸດ, ສະມະຊິກສະຫະພັນນັກຮົບເກົ່າ ແລະ ພາກສ່ວນອື່ນທີ່ມີສ່ວນພົວພັນ, ຊຸກຍູ້ການແກ້ໄຂຜົນຂອງການຕິດຕາມກວດກາໃຫ້ມີຜົນສັກສິດ. ພ້ອມນີ້, ກໍເອົາໃຈໃສ່ຄົ້ນຄ້ວາ, ແກ້ໄຂຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳ ທີ່ພົວພັນເຖິງຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສະຫະພັນນັກຮົບເກົ່າ ໃຫ້ຖືກຕ້ອງຕາມກົດໝາຍ;

4. ສືບຕໍ່ປັບປຸງກົງຈັກການຈັດຕັ້ງພາຍໃນກຳມາທິການ, ລະບົບກົນໄກປະສານງານ ລະຫວ່າງ ກປຊສ ກັບກົງຈັກການຈັດຕັ້ງພາຍໃນສະພາແຫ່ງຊາດ, ສະພາປະຊາຊົນແຂວງ, ອົງການຈັດຕັ້ງຕ່າງໆ ທາງເບື້ອງລັດນັບທັງສູນກາງ ແລະ ທ້ອງຖິ່ນ ຕາມຂອບເຂດສິດຂອງຕົນ ໃຫ້ເໝາະສົມ ແລະ ມີຄວາມສະດວກ, ຄ່ອງຕົວຂຶ້ນ;

5. ເພີ່ມທະວີການພົວພັນຮ່ວມມື ໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ກັບຕ່າງປະເທດ ແລະ ການຈັດຕັ້ງສາກົນ ຕາມແຜນການ ແລະ ຕາມການຊີ້ນຳມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ.

## ກກໝ...

ໝາຍ ໂດຍມີຫົວໜ້າ-ຮອງຫົວໜ້າກົມ, ຫົວໜ້າ-ຮອງຫົວໜ້າພະແນກ, ລັດຖະກອນວິຊາການກົມຕິດ ຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ ແລະ ລັດຖະກອນວິຊາການ ທີ່ກ່ຽວຂ້ອງຈຳນວນໜຶ່ງ ເຂົ້າຮ່ວມ ເພື່ອຄົ້ນຄວ້າ, ປະກອບຄຳເຫັນໃສ່ຮ່າງຄູ່ມືການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ. ນອກຈາກນັ້ນ, ກອງປະຊຸມຍັງໄດ້ຮັບຟັງ ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂອງລັດຖະສະພາສາກົນ ເປັນຕົ້ນປະເທດອິນໂດເນເຊຍ ແລະ ປະເທດອັງກິດ ຈາກຊ່ຽວຊານຕ່າງປະເທດ (ດ້ວຍຮູບແບບທາງໄກ).

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກໂຄງການ WFD (Westminster Foundation for Democracy).

(ກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ)

# ປະທັບໃຈຄຳກ່າວສັນລະເສີນຂອງຜູ້ນຳລາວ-ຫວຽດນາມ

# ໂດຍ: ທ່ານ ຄຳວິສັນ ແກ້ວສຸວັນ

ຂ້າພະເຈົ້າໄດ້ເຂົ້າຮ່ວມພິທີໂຮມຊຸມນຸມສະເຫລີມສະຫລອງປີສາມັກຄີມິດຕະພາບລາວ-ຫວຽດນາມ, ຫວຽດນາມ-ລາວປີ 2022 ໃນວັນທີ 18 ກໍລະກົດ 2022 ທີ່ຫໍປະຊຸມແຫ່ງຊາດ ນະຄອນຫລວງວຽງຈັນ... ໃນນາມນັກຂ່າວຜູ້ໜຶ່ງຂ້າພະເຈົ້າຮູ້ສຶກປະທັບໃຈຕໍ່ສູນທອນພົດຂອງທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ພັກປະຊາຊົນປະຕິວັດລາວ, ປະທານປະເທດແຫ່ງ ສປປລາວ ທີ່ກ່າວສັນລະເສີນຄວາມສາມັກຄີແບບພິເສດທີ່ຍິ່ງໃຫຍ່, ການຮ່ວມມືຮອບດ້ານລະຫວ່າງສອງຊາດລາວ-ຫວຽດນາມ ເຊິ່ງທ່ານກ່າວບາງຕອນວ່າ: "ການພົວພັນລາວ-ຫວຽດນາມທີ່ບໍ່ຄືໃຜ ແລະ ບໍ່ມີໃຜຄືຫລື ໜຶ່ງບໍ່ມີສອງ..." ບໍ່ທໍ່ນັ້ນທ່ານຍັງໄດ້ຍົກເອົາຄຳກ່າວຂອງປະທານໄກສອນ ພົມວິຫານ ທີ່ໄດ້ກ່າວຕໍ່ກອງປະຊຸມໃຫຍ່ ຄັ້ງທີ IV ຂອງພັກກອມມູນິດຫວຽດນາມ ໃນວັນທີ 15 ທັນວາ 1976 ວ່າ: "ໃນປະຫວັດສາດຂອງການປະຕິວັດໂລກໄດ້ມີແວ່ນແຍງທີ່ໃສແຈ້ງແຫ່ງນ້ຳໃຈສາກົນກຳມະຊີບມາຫລາຍແລ້ວ, ແຕ່ບໍ່ທັນມີຢູ່ໃສ ແລະ ເວລາໃດທີ່ມີຄວາມສາມັກຄີ, ການສຳພັນສູ້ຮົບແບບພິເສດ, ຍາວນານ, ຮອບດ້ານຄືການພົວພັນສອງຊາດລາວ-ຫວຽດນາມ..."

ໃນມື້ດຽວກັນນີ້, ຂ້າພະເຈົ້າກໍໄດ້ຕິດຕາມພິທີໂຮມຊຸມນຸມໃຫຍ່ຢູ່ນະຄອນຫລວງຮ່າໂນ້ຍ, ສສ.ຫວຽດນາມ ເຊັ່ນກັນກໍຮູ້ສຶກປະທັບໃຈຕໍ່ຄຳກ່າວຢືນຢັນການຮ່ວມສຳພັນແບບພິເສດລະຫວ່າງສອງຊາດລາວ-ຫວຽດນາມ; ຫວຽດນາມ-ລາວ ໃນອະນາຄົດຕໍ່ໜ້າຂອງທ່ານ ຫວຽນ ຝູ ຈ້ອງ ເລຂາທິການໃຫຍ່ພັກກອມມູນິດຫວຽດນາມເຊິ່ງທ່ານໄດ້ກ່າວບາງຕອນໃນສູນທອນພົດຂອງເພິ່ນວ່າ: "ໃນສະພາບການໂລກ ແລະ ພາກພື້ນພວມມີການຜັນແປຢ່າງໄວວາ, ສັບສົນ ແລະ ຄາດທີ່ຈະຄາດຄະເນລ່ວງໜ້າໄດ້ ສອງພັກ, ລັດ ແລະ ປະຊາຊົນສອງຊາດຍິ່ງຕ້ອງສາມັກຄີສະໜິດຕິດພັນເພີ່ມທະວີການຮ່ວມມືກວ່າເກົ່າອີກ...ພັກ, ລັດ ແລະ ປະຊາຊົນຫວຽດນາມຍາມໃດກໍສະໜັບສະໜູນຢ່າງແຂງແຮງ, ຮອບດ້ານວິວັດການປ່ຽນແປງໃໝ່ຂອງລາວ, ພ້ອມທັງຖືສຳຄັນ ແລະ ສະຫງວນບຸລິມະສິດແຖວໜ້າໃຫ້ແກ່ການພົວພັນພິເສດ ທັງເປັນສະຫາຍ, ທັງເປັນອ້າຍນ້ອງກັນລະຫວ່າງສອງພັກ, ສອງລັດເຮົາ..."

ນອກນັ້ນ, ເພິ່ນຍັງໄດ້ຍົກຄຳກ່າວຂອງປະທານ ໄກສອນ ພົມວິຫານ ມາຢັ້ງຢືນອີກວ່າ: "ເຖິງແມ່ນວ່າໂລກຈະມີການປ່ຽນແປງຄືແນວໃດກໍຕາມແຕ່ພວກເຮົາກໍຍັງຕັດສິນໃຈຮ່ວມກັນຮັກສາ ແລະ ເສີມຂະຫຍາຍສາຍພົວພັນພິເສດ, ຊື່ສັດບໍລິສຸດຫວຽດນາມ-ລາວຢ່າງຖືກຕ້ອງດັ່ງຄວາມມຸ່ງມາດປາຖະໜາຂອງປະທານໄກສອນ ພົມວິຫານທີ່ວ່າ: ເຖິງວ່າພູຈະຖືກເຊາະເຈື່ອນ, ແມ່ນ້ຳລຳເຊຈະເຫືອດແຫ້ງແຕ່ສາຍພົວພັນມິດຕະພາບລາວ-ຫວຽດນາມ ຈະໝັ້ນຄົງຍິ່ງກວ່າພູເຂົາສູງຊັນ, ເລິກກວ່າແມ່ນ້ຳລຳເຊ..." ຂໍອວຍພອນໃຫ້ຄວາມສາມັກຄີແບບພິເສດທີ່ບໍ່ມີໃຜຄື ແລະ ບໍ່ຄືໃຜ ຫລືໜຶ່ງບໍ່ມີສອງ ລະຫວ່າງ ສອງຊາດລາວ-ຫວຽດນາມ, ຫວຽດນາມ-ລາວ ໝັ້ນຄົງຍືນຍົງຕະຫລອດການະນານ.

## ສະເຫລີມສະຫລອງວັນສ້າງຕັ້ງແຂວງອຸດົມໄຊ ແລະ ວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບແຂວງອຸດົມໄຊ



(ສພຊ) ຕອນເຊົ້າຂອງວັນທີ 15 ກໍລະກົດ 2022 ຢູ່ສະໂມສອນຂອງແຂວງອຸດົມໄຊ, ພິທີໂຮມຊຸມນຸມສະເຫລີມສະຫລອງວັນສ້າງຕັ້ງແຂວງອຸດົມໄຊ ຄົບຮອບ 60 ປີ ແລະ ວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບແຂວງຄົບຮອບ 60 ປີ, ໄດ້ຈັດຂຶ້ນຢ່າງເປັນທາງການ ໂດຍເປັນກຽດເຂົ້າຮ່ວມຂອງທ່ານ ບຸນທອງ ຈິດມະນີ ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການຄະນະເລຂາທິການສູນກາງພັກ, ຮອງປະທານປະເທດແຫ່ງ ສປປລາວ, ທ່ານ ບຸນຄົງ ຫລ້າຈຽມພອນ ກຳມະການສຳຮອງສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງອຸດົມໄຊ, ມີບັນດາທ່ານອະດີດເລຂາພັກແຂວງ, ເຈົ້າແຂວງອຸດົມໄຊ, ບັນດາການນຳ, ອາດີດການນຳແຂວງ, ການນຳແຂວງໃກ້ຄຽງ, ຄະນະປະຈຳສະພາປະຊາຊົນແຂວງ (ສພຂ), ອະດີດສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ບັນດາຫົວໜ້າພະແນການ, ສອງກອງບັນຊາການ ປກຊ-ປກສ, ບັນດາຂະແໜງການ, ລັດວິສາຫະກິດ, ນັກທຸລະກິດ, ພະນັກງານຫລັກແຫລ່ງ, ຊາວໜຸ່ມເຍົາວະຊົນ ຕະຫລອດຮອດອົງການປົກຄອງບ້ານໃນເທດສະບານເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ທ່ານ ບຸນຄົງ ຫລ້າຈຽມພອນ ກຳມະການສຳຮອງສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງງອຸດົມໄຊ ຂຶ້ນກ່າວປາໄສຕໍ່ງານໂຮມຊຸມນຸມວ່າ: ແຂວງອຸດົມໄຊ ໃນເມື່ອກ່ອນເປັນກິ່ງແຂວງໄຊຍະພູມ ຂຶ້ນກັບແຂວງຫລວງພະບາງ ເຊິ່ງປະກອບມີ 3 ເມືອງຄື: ເມືອງໄຊ, ເມືອງຮຸນ ແລະ ເມືອງປາກທາ ມີສຳນັກງານຕັ້ງຢູ່ເມືອງໄຊ ເປັນດິນແດນທີ່ມີມູນເຊື້ອປະຕິວັດອັນອົງອາດກ້າຫານ, ເດັດດ່ຽວໜຽວແໜ້ນ, ມີຂະບວນການປະຕິວັດຕໍ່ສູ້ປົດປ່ອຍຊາດພາຍໃຕ້ການນຳພາຂອງພັກກອມມູນິດອິນດູຈີນມາແຕ່ກ່ອນຊຸມ ປີ 1945, ຕໍ່ມາກໍໄດ້ກາຍເປັນເຂດທີ່ໝັ້ນອັນແຂງແກ່ນຂອງການປະຕິວັດລາວ, ພາຍຫລັງເມືອງໄຊໄດ້ຮັບການປົດປ່ອຍໃນທີ 15 ເມສາ 1961, ສູນກາງພັກໄດ້ຕົກລົງເອົາກິ່ງແຂວງໄຊຍະພູມ ສ້າງຕັ້ງເປັນແຂວງຢ່າງເປັນທາງການໃນວັນທີ 15 ກໍລະກົດ 1962 ເຊິ່ງເອີ້ນວ່າ: “ແຂວງລ້ານຊ້າງ” ຮອດປີ 1965 ແຂວງລ້ານຊ້າງ ໄດ້ປ່ຽນຊື່ມາເປັນ “ແຂວງເມືອງໄຊ” ແລະ ມາຮອດປີ 1967 ແຂວງເມືອງໄຊໄດ້ປ່ຽນຊື່ມາເປັນ “ ແຂວງອຸດົມໄຊ ” ຈົນເຖິງປັດຈຸບັນ.

ໄປຄຽງຄູ່ກັບການທວນຄືນມູນເຊື້ອວັນສ້າງຕັ້ງແຂວງອຸດົມໄຊແລ້ວ ພວກເຮົາຍັງລະນຶກເຖິງມູນເຊື້ອວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບແຂວງຄົບຮອບ 60 ປີ. ໃນວັນທີ 4 ເມສາ ປີ 1962 ຢູ່ທີ່ສຳນັກງານປົດລັບເຂດບ້ານຈັນວາງ, ຕາແສງນ້ຳພູນ, ເມືອງຮຸນ, ຄະນະພັກແຂວງ ໄດ້ຕົກລົງຈັດຕັ້ງກຳລັງປ້ອງກັນຂຶ້ນທຳອິດເອີ້ນວ່າ: “ໜ່ວຍປ້ອງກັນສຳນັກ” ຈາກນັ້ນຜ່ານຂະບວນການໃນແຕ່ລະໄລຍະກໍໄດ້ປ່ຽນຊື່ຂອງກຳລັງຫຼາຍຄັ້ງເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງ. ຈົນມາຮອດປີ 1986 ກະຊວງປ້ອງກັນຄວາມສະຫງົບໄດ້ປ່ຽນຊື່ມາເປັນ “ກອງບັນຊາການປ້ອງກັນຄວາມສະຫງົບ” ຈົນເຖິງປັດຈຸບັນ ແລະ ມາຮອດວັນທີ 15 ພຶດສະພາ 2016 ກະຊວງປ້ອງກັນຄວາມສະຫງົບໄດ້ຕົກລົງຮັບຮອງເອົາວັນທີ 4 ເມສາ 1962 ເປັນວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບແຂວງອຸດົມໄຊ ຢ່າງເປັນທາງການ.

ການສະເຫລີມສະຫລອງວັນສ້າງຕັ້ງແຂວງອຸດົມໄຊ ຄົບຮອບ 60 ປີນີ້ ພໍດີກົງກັບປີແຫ່ງຄວາມສາມັກຄີ, ມິດຕະພາບລາວ-ຫວຽດນາມ, ຫວຽດນາມ-ລາວ ນັ້ນກໍຄືວັນວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືຄົບຮອບ 45 ປີ ແລະ ວັນສ້າງຕັ້ງສາຍພົວພັນທາງການທູດ ຄົບຮອບ 60 ປີ ເຊິ່ງຕະຫລອດໄລຍະຜ່ານມາ ແຂວງອຸດົມໄຊ ໄດ້ມີການພົວພັນມິດຕະພາບ ແລະ ການຮ່ວມມືຮອບດ້ານກັບ 8 ແຂວງ, 1 ນະຄອນ ແລະ 1 ກອງບັນຊາການທະຫານເຂດ II ຂອງ ສສ.ຫວຽດນາມ.

ພິທີໃນຄັ້ງນີ້, ຍັງໄດ້ຈັດພິທີປະດັບຫລຽນໄຊອິດສະຫລະຊັ້ນ 3 ຂອງປະທານປະເທດ ແລະ ໃບຢັ້ງຢືນໃຫ້ແຂວງອຸດົມໄຊ, ເພື່ອເປັນສິ່ງຢັ້ງຢືນເຖິງຜົນງານຂອງແຂວງທີ່ໄດ້ປະກອບສ່ວນສຳຄັນເຂົ້າໃນພາລະກິດຕໍ່ສູ້ກູ້ຊາດໃນເມື່ອກ່ອນ ກໍຄືພາລະກິດປົກປັກຮັກ ແລະ ສ້າງສາພັດທະນາປະເທດຊາດໃນປັດຈຸບັນ ເປັນກຽດປະດັບຫລຽນໄຊອິດສະຫລະຊັ້ນ 3 ໂດຍທ່ານ ບຸນທອງ ຈິດມະນີ ແລະ ຕາງໜ້າຄະນະພັກຄະນະນຳຂອງແຂວງຂຶ້ນຮັບຫລຽນໄຊອິດສະຫລະຊັ້ນ 3 ຄັ້ງນີ້ ໂດຍທ່ານ ບຸນຄົງ ຫລ້າຈຽມພອນ. ພ້ອມນັ້ນ, ຍັງໄດ້ມອບຂອງທີ່ລະນຶກໃຫ້ແກ່ຄອບຄົວອາດີດເຈົ້າແຂວງອຸດົມໄຊແຕ່ລະສະໄໝຕື່ມອີກ.

(ແສງພອນ ອິນນະລົງ)



## ຖະແຫລງດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຫົວພັນ



(ສພຊ) ໃນຕອນບ່າຍວັນທີ 21 ກໍລະກົດ 2022 ທີ່ສະພາປະຊາຊົນແຂວງ (ສພຂ) ຫົວພັນ, ທ່ານ ຄຳຟອງ ກົ້ວມີໄຊ ເລຂາທິການ ສພຂ ຫົວພັນ ໄດ້ຖະແຫລງຂ່າວກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຫົວພັນ ຊຸດທີ II ວ່າ: ໂດຍປະຕິບັດຕາມມາດຕາ 60 ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບປັບປຸງປີ 2020 ປະຕິບັດມະຕິຂອງຄະນະປະຈຳ ສພຂ ຫົວພັນ ສະບັບເລກທີ 299/ຄປຈຂ, ລົງວັນທີ 3 ມິຖຸນາ 2022 ແລະ ແຜນການກະກຽມ, ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຫົວພັນ ຊຸດທີ II, ສພຂ ຫົວພັນ ໄດ້ປະສານສົມທົບກັບອົງການປົກຄອງແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ແລະ ພະແນການກ່ຽວຂ້ອງ ໃນການກະກຽມບັນດາເນື້ອໃນທີ່ກ່ຽວຂ້ອງກັບແຕ່ລະພາກສ່ວນ ເພື່ອຈະລາຍງານ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຫົວພັນ.

ຕາງໜ້າຄະນະປະຈຳ ສພຂ ຫົວພັນ ຖືເປັນກຽດຢ່າງສູງແຈ້ງມາຍັງບັນດາທ່ານການນຳຂອງແຂວງ, ການນຳບັນດາເມືອງ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ນັກທຸລະກິດ, ພໍ່ຄ້າຊາວຂາຍ, ສື່ມວນຊົນຕ່າງໆ ແລະ ປະຊາຊົນບັນດາເຜົ່າທົ່ວແຂວງຫົວພັນ ໄດ້ຮັບຊາບກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຫົວພັນ ຊຸດທີ II ຈະໄດ້ໄຂຂຶ້ນໃນລະຫວ່າງວັນທີ 27-29 ກໍລະກົດ 2022 ທີ່ຫ້ອງປະຊຸມ ສພຂ ຫົວພັນ.

ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຫົວພັນ ຈະໄດ້ຮັບຟັງການລາຍງານ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ ດັ່ງນີ້: ບົດລາຍງານໂດຍສັງເຂບຂອງທ່ານເຈົ້າແຂວງ ກ່ຽວກັບວຽກງານທີ່ພົ້ນເດັ່ນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ 2022 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022; ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນຕົ້ນປີ 2022 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022; ບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ; ບົດລາຍງານກ່ຽວກັບການຄຸ້ມຄອງການສຳຫລວດ, ຂຸດຄົ້ນ ແລະ ການຂົນສົ່ງແຮ່ທາດ ຢູ່ແຂວງຫົວພັນ; ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດການຄຸ້ມຄອງການສົ່ງເສີມ ທຸລະກິດຂະໜາດກາງ, ຂະໜາດນ້ອຍ SME ຢູ່ແຂວງຫົວພັນ; ບົດລາຍງານການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ກ່ຽວກັບການແກ້ໄຂຢາເສບຕິດ ຕາມມະຕິສະບັບເລກທີ 04/ສພຊ ແລະ ການຕິດຕາມການນຳໃຊ້ 7 ມາດຕະການສະກັດກັ້ນ ຂອງອົງການສືບສ່ວນສອບສວນ ຂອງອົງການໄອຍະການປະຊາຊົນ ແຂວງຫົວພັນ; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການສ້າງຜູ້ພິພາກສາດີ-ເກັ່ງຂອງສານປະຊາຊົນແຂວງຫົວພັນ; ບົດລາຍງານການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງ ສພຂ ຫົວພັນ; ຮ່າງຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການປະເມີນລາຄາທີ່ດິນ ຢູ່ແຂວງຫົວພັນ; ຮ່າງຂໍ້ຕົກລົງ ຂອງເຈົ້າແຂວງ ວ່າດ້ວຍນະໂຍບາຍສົ່ງເສີມການລົງທຶນກິດຈະກຳການປູກ-ການລ້ຽງ ເປັນສິນຄ້າ ຢູ່ແຂວງຫົວພັນ.

ທ່ານ ຄຳຟອງ ກົ້ວມີໄຊ ເພື່ອຄວາມສະດວກໃຫ້ກັບພໍ່ແມ່ປະຊາຊົນບັນດາເຜົ່າ ທີ່ຢາກປະກອບຄຳຄິດເຫັນ ແລະ ຢາກສະເໜີບັນຫາຕ່າງໆ ເຂົ້າມາຍັງ ສພຂ ໃນໄລຍະທີ່ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຄັ້ງນີ້, ຄະນະເລຂາທິການ ສພຂ ໄດ້ຕັ້ງໜ່ວຍງານຮັບຜິດຊອບສາຍດ່ວນ ເພື່ອຮັບເອົາຄຳຄິດເຫັນ, ຄຳສະເໜີຂອງພໍ່ແມ່ປະຊາຊົນບັນດາເຜົ່າ ທ່ານສາມາດສົ່ງຄຳຄິດເຫັນ ແລະ ຄຳສະເໜີຂອງທ່ານມາຍັງກອງປະຊຸມຜ່ານໂທລະສັບສາຍດ່ວນບໍ່ໄດ້ເສຍຄ່າ ໝາຍເລກ 064 156, Facebook/ສະພາປະຊາຊົນ ແຂວງຫົວພັນ; ສົ່ງອີເມວ: sapha8@hotmail.com ແລະ ແຟັກ: 064 312 878.

ໃນນາມຕາງໜ້າຄະນະປະຈຳ ສພຂ ຫົວພັນ, ຂໍເຊີນຊວນບັນດາທ່ານການນຳຂອງແຂວງ, ການນຳບັນດາເມືອງ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ນັກທຸລະກິດ, ພໍ່ຄ້າຊາວຂາຍ, ກຳມະກອນ ຊາວຜູ້ອອກແຮງງານ, ສື່ມວນຊົນຕ່າງໆ ແລະ ປະຊາຊົນບັນດາເຜົ່າ ໃນທົ່ວແຂວງຫົວພັນ ຈົ່ງໄດ້ຕິດຕາມວາລະດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາປະຊາຊົນແຂວງໃນວາລະດຳເນີນກອງປະຊຸມຄັ້ງນີ້ຈະມີການລາຍງານຂ່າວ ຜ່ານທາງວິທະຍຸ, ໂທລະພາບ, ໂທລະໂຄ່ງ, ໜັງສືພິມ, ສື່ອອນລາຍ (Facebook) ເພື່ອອຳນວຍຄວາມສະດວກໃຫ້ບັນດາທ່ານໄດ້ຕິດຕາມຮັບຟັງ, ຮັບຊົມ ພ້ອມກັນນີ້ຂໍຮຽກຮ້ອງມາຍັງທຸກພາກສ່ວນຈົ່ງໃຫ້ການສະໜັບສະໜູນ ແລະ ໃຫ້ຄວາມຮ່ວມມືໃນທຸກດ້ານ ເພື່ອເຮັດໃຫ້ກອງປະຊຸມສະໄໝສາມັນເທື່ອທີ 3 ດຳເນີນໄປດ້ວຍຜົນສຳເລັດຢ່າງຈົບງາມ.

## ຮ່ວມໃຈບໍລິຈາກເລືອດ ໂດຍບໍ່ຮຽກຮ້ອງສິ່ງຕອບແທນ



(ສພຊ) ຕອນເຊົ້າຂອງວັນທີ 6 ກໍລະກົດ 2022 ສະພາປະຊາຊົນແຂວງ (ສພຂ) ຫລວງນ້ຳທາ ໄດ້ຈັດກິດຈະກຳຮ່ວມໃຈກັນບໍລິຈາກເລືອດໂດຍບໍ່ຮຽກຮ້ອງສິ່ງຕອບແທນ ທີ່ຫ້ອງປະຊຸມຂອງ ສພຂ ຫລວງນ້ຳທາ ໂດຍການເປັນປະທານຂອງທ່ານ ມີໄຊ ມີວິໄລ ເລຂາທິການ ສພຂ, ມີຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ຜູ້ຕາງໜ້າຈາກອົງການກາແດງ ປະຈຳແຂວງຫລວງນ້ຳທາ ໄດ້ຂຶ້ນກ່າວຈຸດປະສົງໃນການຈັດກິດຈະກຳຄັ້ງນີ້ ພ້ອມທັງໂຄສະນາປຸກລະດົມຈິດໃຈພະນັກງານລັດຖະກອນທຸກທ່ານທີ່ເຂົ້າຮ່ວມກິດຈະກຳຄັ້ງນີ້ ຈົ່ງພ້ອມໃຈກັນບໍລິຈາກເລືອດ ເພື່ອເປັນການຊ່ວຍເຫລືອສັງຄົມ, ຜ່ານມາດຖານເງື່ອນໄຂຂອງຜູ້ທີ່ຈະບໍລິຈາກເລືອດ ແລະ ສິດທີ່ຜູ້ບໍລິຈາກເລືອດທີ່ຈະໄດ້ຮັບ, ທັງນີ້ ສູນບໍລິຈາກເລືອດກໍໄດ້ຖືເອົາວຽກງານການປຸກລະດົມບໍລິຈາກເລືອດແບບສະໝັກໃຈ ບໍ່ຮຽກຮ້ອງສິ່ງຕອບແທນ ເປັນບູລິມະສິດສຳຄັນອັນໜຶ່ງ ໂດຍມີການຈັດຕັ້ງເຄື່ອນໄຫວຂົນຂວາຍຜູ້ບໍລິຈາກເລືອດດ້ວຍຫຼາຍຮູບການ ແລະ ຈັດຕັ້ງເຄື່ອນໄຫວຮັບບໍລິຈາກເລືອດຮ່ວມກັບການຈັດຕັ້ງ ແລະ ຊຸມຊົນຕ່າງໆຈຳນວນໜຶ່ງ ແຕ່ເລືອດທີ່ໄດ້ມານັ້ນຍັງບໍ່ພຽງພໍ ສາເຫດຕົ້ນຕໍກໍຍ້ອນວ່າຈຳນວນຜູ້ບໍລິຈາກເລືອດ ຍັງມີຈຳກັດ ຫລາຍຄົນຍັງຢ້ານກົວຕໍ່ການບໍລິຈາກເລືອດ ແລະ ອື່ນໆ.

ໂອກາດດັ່ງກ່າວ, ທ່ານ ມີໄຊ ມີວິໄລ ກໍໄດ້ຍົກໃຫ້ເຫັນເຖິງບົດບາດຄວາມສຳຄັນຂອງການບໍລິຈາກເລືອດ ເຊິ່ງເປັນການເສຍສະຫລະຊ່ວຍເຫລືອສັງຄົມມະນຸດດ້ວຍກັນທີ່ຍັງລໍຄອຍການຊ່ວຍເຫລືອ.

ເລືອດທີ່ໄດ້ຮັບຈາກການບໍລິຈາກໃນຄັ້ງນີ້ແມ່ນຈະນຳໄປຊ່ວຍເຫລືອຄົນເຈັບທີ່ຕ້ອງການເລືອດ ເພື່ອໃຫ້ເກີດປະໂຫຍດສູງສຸດຕໍ່ສັງຄົມ, ການບໍລິຈາກເລືອດເປັນສິ່ງທີ່ປະເສີດ, ການບໍລິຈາກເລືອດ ແມ່ນການສ້າງບຸນກຸສົນອັນຍິ່ງໃຫຍ່ຂອງທ່ານ ເພາະວ່າທ່ານໄດ້ຊ່ວຍກອບກູ້ເອົາຊີວິດຂອງຄົນຜູ້ທີ່ກຳລັງຈະສິ້ນຫວັງໃຫ້ມີຊີວິດກັບຄືນມາ.

(ນາງ ວັນນີ ແຟງບົວວັນ)

# ຮອງປະທານ ສປນວ ຍົກໃຫ້ເຫັນຜົນສຳເລັດຫລາຍດ້ານທີ່ໄດ້ປະຕິບັດໃນໄລຍະຜ່ານມາ



ເນື່ອງໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ທ່ານ ບຸນທາມ ພຸດທະວົງສາ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ IX ທັງເປັນຮອງປະທານສະພາປະຊາຊົນນະຄອນຫລວງວຽງຈັນ (ສປນວ) ໄດ້ໃຫ້ສຳພາດຕໍ່ສື່ມວນຊົນ ເຊິ່ງທ່ານໃຫ້ຮູ້ວ່າ: ຜ່ານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານໃນໄລຍະຜ່ານມາ, ຄະນະ ສສຊ ໄດ້ເຄື່ອນໄຫວວຽກງານ ມີທັງຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຫລາຍໆດ້ານ ເປັນຕົ້ນແມ່ນສະພາບເສດຖະກິດ-ສັງຄົມ, ການເມືອງ ແລະ ການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ສົ່ງຜົນກະທົບຕໍ່ການເຄື່ອນໄຫວວຽກງານຂອງຫລາຍອົງການຈັດຕັ້ງພັກ-ລັດ ແລະ ເສດຖະກິດ-ສັງຄົມ ເປັນບໍລິເວນກວ້າງ, ແຕ່ເຖິງຈະພົບຄວາມຫຍຸ້ງຍາກດັ່ງກ່າວ ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫລວງວຽງຈັນ (ນວ) ໄດ້ສຸມໃສ່ເຄື່ອນໄຫວວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນທີ່ກຳນົດໄວ້ໃນກົດໝາຍ ດ້ວຍຄວາມຮັບຜິດຊອບສູງ ແລະ ໄດ້ຮັບຜົນສຳເລັດໃນຫລາຍດ້ານຄື:

**ດ້ານນິຕິບັນຍັດ:** ເປັນເຈົ້າການນຳເອົາບັນດາຮ່າງກົດໝາຍ ຈຳນວນ 22 ສະບັບ ມາຈັດຕັ້ງທາບທາມຄຳຄິດຄຳເຫັນຮ່ວມກັບບັນດາອົງການຈັດຕັ້ງລັດອ້ອມຂ້າງນະຄອນຫລວງ ແລະ ລາຍງານຜົນການທາບທາມໃຫ້ ສພຊ ຮັບຊາບ ເພື່ອກະກຽມນຳເຂົ້າພິຈາລະນາໃນກອງປະຊຸມ ສພຊ ເຊິ່ງໃນນີ້, ມີ 2 ສະບັບທີ່ຕິດພັນກັບວາລະແຫ່ງຊາດ ຄື: ກົດໝາຍວ່າດ້ວຍຢາເສບຕິດ ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສ່ວຍສາອາກອນ; ສົມທົບກັບອົງການປົກຄອງ ນວ ຈັດກອງປະຊຸມການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ແລະ ກົດໝາຍວ່າດ້ວຍແຮ່ທາດ; ເຂົ້າຮ່ວມພິທີສະເຫລີມສະຫລອງວັນລັດຖະທຳມະນູນແຫ່ງຊາດ ທີ່ ສພຊ ຈັດຂຶ້ນຢ່າງຄຶກຄື້ນ ແລະ ສົມກຽດ ຢ່າງພ້ອມພຽງ ເຊິ່ງເປັນການໂຄສະນາເຜີຍແຜ່ມູນເຊື້ອການນຳພາຂອງພັກ ໃນການສ້າງລັດປະຊາທິປະໄຕ ປະຊາຊົນໃຫ້ເປັນລັດທີ່ປົກຄອງດ້ວຍກົດໝາຍເທື່ອລະກ້າວ; ປູກລະດົມຂົນຂວາຍໃຫ້ພະນັກງານ, ທະຫານ, ຕຳຫລວດ ແລະ ປະຊາຊົນບັນດາເຜົ່າ ຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບລັດຖະທຳມະນູນ, ກົດໝາຍ; ສ້າງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍໃຫ້ນັບມື້ສູງຂຶ້ນ.

**ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງຊາດ ແລະ ນວ:** ໄດ້ເອົາໃຈໃສ່ເຂົ້າຮ່ວມກອງປະຊຸມຂອງ ສພຊ 3 ຄັ້ງ ໂດຍໄດ້ສຸມໃສ່ຄົ້ນຄວ້າ, ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ໃນຖານະທີ່ເປັນຕົວແທນຂອງປະຊາຊົນ ນວ ຕໍ່ບັນດາເນື້ອໃນທີ່ເປັນບັນຫາສຳຄັນພື້ນຖານຂອງຊາດສຳເລັດຕາມລະດັບຄາດໝາຍ ໂດຍເນື້ອໃນທັງໝົດໄດ້ຮັບການຮັບຮອງອອກເປັນມະຕິຂອງກອງປະຊຸມ ສພຊ ທັງໝົດ 47 ສະບັບ ເພື່ອເປັນບ່ອນອີງໃຫ້ແກ່ລັດຖະບານ, ອົງການຈັດລັດຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ນຳໄປຈັດຕັ້ງປະຕິບັດຕາມພາລະບົດບາດຂອງແຕ່ລະພາກສ່ວນຮັບຜິດຊອບ; ເຂົ້າຮ່ວມກອງປະຊຸມຄະນະປະຈຳ ສພຊ ແລະ ກອງປະຊຸມປຶກສາຫາລືວຽກງານສຳຄັນຕ່າງໆ ໃນຮູບແບບປົກກະຕິ ແລະ ຮູບແບບທາງໄກ ຕາມການເຊື້ອເຊີນຂອງ ສພຊ ເປັນຕົ້ນແມ່ນ ກອງປະຊຸມປຶກສາຫາລືກ່ຽວກັບມາດຕະການປ້ອງກັນຄວບຄຸມ ແລະ ສະກັດກັ້ນການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19; ກອງປະຊຸມປຶກສາຫາລືກ່ຽວກັບແຜນພັດທະນາພະລັງງານໄຟຟ້າຂອງ ສປປລາວ (2021-2030), ແຜນພັດທະນາພະລັງງານ ແລະ ບໍ່ແຮ່ 5 ປີ (2021-2025); ກອງປະຊຸມການປະກອບຄຳເຫັນໃສ່ຮ່າງກົດໝາຍ 3 ສະບັບ ແລະ ຮ່າງວິໄສທັດການພັດທະນາເສດຖະກິດດິຈິຕອນແຫ່ງຊາດ, ຮ່າງຍຸດທະສາດການພັດທະນາເສດຖະກິດດິຈິຕອນແຫ່ງຊາດ, ຮ່າງແຜນພັດທະນາເສດຖະກິດດິຈິຕອນແຫ່ງຊາດ ແລະ ກອງປະຊຸມຄົບຄະນະປະ ຈຳປີ 2021 ຂອງບັນດາກຳມາທິການ ຂອງ ສພຊ; ໄດ້ດຳເນີນກອງປະຊຸມ ປະຈຳປີ 2021 ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 1 ເຊິ່ງກອງປະຊຸມໄດ້ຮັບຟັງການລາຍງານ ແລະ ພິຈາລະນາບັນຫາສຳຄັນ ເປັນຕົ້ນແມ່ນຮັບຟັງການລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022; ແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 1 ນວ ແລະ ໄດ້ຮັບຟັງການຊີ້ແຈງບາງໂຄງການພັດທະນາຢູ່ ນວ ຈາກພາກສ່ວນກ່ຽວຂ້ອງອີກດ້ວຍ; ປະສານສົມທົບກັບ ຄະນະປະຈຳ ສປນວ ພິຈາລະນາບັນຫາສຳຄັນຂອງ ນວ, ວຽກງານຂອງສະພາປະຊາຊົນ ແລະ ວຽກງານຂົງເຂດຕຸລາການ ຜ່ານກອງປະຊຸມສາມັນປະຈຳເດືອນຂອງຄະນະປະຈຳ ໄດ້ທັງໝົດ 22 ເນື້ອໃນ ໃນນັ້ນ, ວຽກງານຂອງອົງການປົກຄອງ ນວ 6 ເນື້ອໃນ; ວຽກງານຂອງ ສປນວ 15 ເນື້ອໃນ ແລະ ວຽກງານຂອງຂົງເຂດຕຸລາການ 1 ເນື້ອໃນ; ປະກອບຄຳຄິດເຫັນຕໍ່ບັນດາເນື້ອໃນທີ່ເປັນບັນຫາພື້ນຖານສຳຄັນຂອງ ນວ ແລະ ຕັ້ງຄຳຊັກຖາມຕໍ່ອົງການປົກຄອງ ນວ ເພື່ອມີຄຳເຫັນຊີ້ແຈງໃນກອງປະຊຸມຂອງ ສປນວ ເຊິ່ງໃນນີ້, ບັນດາທ່ານຜູ້ແທນປະຊາຊົນ ກໍໄດ້ໃຊ້ສິດປະຊາທິປະໄຕຂອງຕົນ ເພື່ອລົງຄະແນນສຽງຮັບຮອງເອົາບັນຫາສຳຄັນຂອງ ນວ ເຊິ່ງສາມາດຮັບຮອງອອກເປັນມະຕິກອງປະຊຸມ ສສນວ ທັງໝົດ 20 ສະບັບ; ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຂອງ ນວ, ວຽກງານພາຍໃນຂອງສະພາປະຊາຊົນ ແລະ ວຽກງານຂົງເຂດຕຸລາການ ຜ່ານກອງປະຊຸມສາມັນປະຈຳເດືອນ ຂອງຄະນະປະຈຳ ສປນວ ທັງໝົດ 37 ເນື້ອໃນ. ໃນນັ້ນ, ວຽກງານຂອງອົງການປົກຄອງ ນວ 11 ເນື້ອໃນ; ວຽກງານຂອງ ສປນວ 45 ເນື້ອໃນ ແລະ ວຽກງານຂອງຂົງເຂດຕຸລາການ ເນື້ອໃນ.

**ດ້ານການຕິດຕາມກວດກາ:** ການເຄື່ອນໄຫວວຽກງານຕິດຕາມກວດກາ ໃນໄລຍະຜ່ານມາ ແມ່ນພົບຄວາມຫຍຸ້ງຍາກໃນເງື່ອນໄຂສະພາບການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ທີ່ແຜ່ຂະຫຍາຍເປັນວົງກວ້າງ ແຕ່ເຖິງຢ່າງໃດກໍຕາມ, ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 1 ກໍໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານຕິດຕາມກວດກາ ໃນສະພາບເງື່ອນໄຂໃໝ່ ໂດຍສົມທົບກັບຄະນະປະຈຳ ສປນວ ແລະ ສສນວ ໃນການເຄື່ອນໄຫວວຽກງານຕິດຕາມກວດກາຄື: ປະສານສົມທົບກັບບັນດາຄະນະກຳມະການຂອງ ສປນວ ເພື່ອກະກຽມຕ້ອນຮັບ ແລະ ອຳນວຍຄວາມສະດວກຮອບດ້ານ ໃຫ້ແກ່ທ່ານຮອງປະທານ ສພຊ ພ້ອມດ້ວຍຄະນະ ໃນການເຄື່ອນໄຫວຕິດຕາມກວດກາສະພາບການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ຢູ່ເຂດເມືອງສັງທອງ, ກອງບໍລິການຂີ້ເຫຍື້ອ ແລະ ສູນຜະລິດປຸ໋ຍຊີວະພາບ ຢູ່ບ້ານນາໄຫ, ເມືອງໄຊເສດຖາ ນວ; ປະສານສົມທົບກັບບັນດາຄະນະກຳມະການຂອງ ສປນວ ເຄື່ອນໄຫວວຽກງານຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິກອງປະຊຸມ ສພຊ ແລະ ສປນວ ເປັນຕົ້ນແມ່ນບັນດາຄາດໝາຍ ແລະ ມາດຕະການຈັດຕັ້ງປະຕິບັດທີ່ໄດ້ກຳນົດໃນແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ຢູ່ບັນດາພະແນກການ, ບັນດາເມືອງ ແລະ ຫົວໜ່ວຍທຸລະກິດ ເພື່ອເປັນຂໍ້ມູນໃນການຄົ້ນຄວ້າ, ປະກອບຄຳເຫັນ ໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ແລະ ຂອງ ສປນວ; ຕິດຕາມກວດກາບັນຫາພົ້ນເດັ່ນທີ່ເກີດຂຶ້ນໃນສັງຄົມຈາກການສະເໜີຂອງປະຊາຊົນ ກ່ຽວກັບການຊົດເຊີຍຊັກຊ້າ, ບໍ່ເໝາະສົມ ແລະ ຜົນກະທົບອື່ນໆ ພາຍຫລັງການຈັດຕັ້ງປະຕິບັດບັນດາໂຄງການພັດທະນາຕ່າງໆຂອງລັດຖະບານ ໃນຂອບເຂດ ນວ ເປັນຕົ້ນແມ່ນໂຄງການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ; ໂຄງການທ່າບົກ-ທ່ານາແລ້ງ (ໂລຊິດສະຕິກ); ໂຄງການກໍ່ສ້າງສາຍສົ່ງໄຟຟ້າ 230 ກວ ແຕ່ນາບົງ ເມືອງປາກງື່ມ-ບ້ານດົງໂພສີ ເມືອງຫາດຊາຍຟອງ ນວ; ຕິດຕາມການສະເໜີຂໍຫັນປ່ຽນທີ່ດິນປ່າທຳມະຊາດໄປເປັນດິນປະເພດອື່ນ ແລະ ຍົກເວັ້ນຄ່າທຳນຽມໃນການຫັນປ່ຽນທີ່ດິນ ຈຳນວນ 67 ເຮັກຕາ 4.585 ຕາແມັດ ຢູ່ບ້ານຈຳປາ ເມືອງສີໂຄດຕະບອງ; ບັນຫາຜົນກະທົບຕໍ່ສິ່ງແວດລ້ອມຈາກການສົ່ງກິ່ນເໝັນເນົ່າ ແລະ ການປ່ອຍນ້ຳເສຍຂອງໂຮງງານຂ້າສັດ; ບັນຫາຂໍ້ຂັດແຍ່ງຂອງສະມາຄົມຈີນ ແລະ ຂໍ້ຂັດແຍ່ງກ່ຽວກັບການຍົກຍ້າຍໂຮງຮຽນປະຖົມອອກຈາກວັດມີໄຊ ເມືອງຈັນທະບູລີ; ບັນຫາຢາເສບຕິດທີ່ຕິດພັນກັບວາລະແຫ່ງຊາດ; ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ຂົງເຂດຍຸຕິທຳໃນການແກ້ໄຂປາກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນໃນສັງຄົມ. ນອກຈາກນັ້ນ, ກໍໄດ້ຮ່ວມກັບ ສພຊ ເຄື່ອນໄຫວວຽກງານຕິດຕາມຊຸກຍູ້ເສດຖະກິດການຜະລິດຢູ່ເມືອງສັງທອງ ແລະ ເຂດເສດຖະກິດພິເສດກວມລວມໄຊເສດຖາ; ສົມທົບກັບພາກສ່ວນກ່ຽວຂ້ອງລົງຕິດຕາມກວດກາລາຄາສິນຄ້າໃນ ນວ ແລະ ຂອບເຂດເມືອງໄຊເສດຖາ.

ທ່ານໃຫ້ຮູ້ຕື່ມວ່າ: ນອກຈາກປະຕິປັດຕາມ 3 ພາລະບົດບາດແລ້ວ ຄະນະ ສສຊ ກໍຄື ສປນວ ໄດ້ເອົາໃຈໃສ່ໃນດ້ານການສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 1 ນວ ເຊັ່ນ ໄດ້ເອົາໃຈໃສ່ເຂົ້າຮ່ວມກອງປະຊຸມເຝິກອົບຮົມ, ສຳມະນາວຽກງານຕ່າງໆ ເພື່ອຍົກລະດັບຄວາມຮູ້ຄວາມສາມາດໃນການປະຕິບັດພາລະບົດບາດຂອງຕົນ ທີ່ ສພຊ ຈັດຂຶ້ນ ເປັນຕົ້ນແມ່ນກອງປະຊຸມສຳມະນາຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມຄັ້ງປະຖົມມະລຶກ; ກອງປະຊຸມສະໄໝວິສາມັນ ເທື່ອທີ 1-2 ຂອງ ສພຊ; ກອງປະຊຸມເຝິກອົບຮົມກ່ຽວກັບພາລະບົດບາດຂອງ ສພຊ ແລະ ສະພາປະຊາຊົນຂັ້ນແຂວງ; ກອງປະຊຸມທາງໄກສຳມະນາແລກປ່ຽນບົດຮຽນ ລະຫວ່າງ ສພຊ ລາວ ກັບ ສພຊ ສສ.ຫວຽດນາມ; ກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງ ເພື່ອຍົກລະດັບຂີດຄວາມສາມາດໃຫ້ແກ່ ສສຊ, ສສນວ. ພ້ອມນັ້ນ, ວຽກງານພົວພັນ ແລະ ຮ່ວມມືກັບຕ່າງປະເທດ: ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 1 ນວ ໄດ້ຮັບການຊັບຊ້ອນເຂົ້າໃນຄະນະມິດຕະພາບລັດຖະສະພາສາກົນ, ຄະນະອົງການລັດຖະສະພາພາກພື້ນ ແລະ ສາກົນ ຈຳນວນ 21 ຄະນະ. ນອກຈາກນີ້, ກໍໄດ້ເຂົ້າເຄື່ອນໄຫວວຽກງານການຕ່າງປະເທດຮ່ວມກັບ ສພຊ ເປັນຕົ້ນແມ່ນເຂົ້າຮ່ວມພົບປະແລກປ່ຽນບົດຮຽນ ແລະ ເຮັດວຽກກັບບັນດາປະເທດເພື່ອນມິດຍຸດທະສາດ, ກອງປະຊຸມຂອງພາກພື້ນ ແລະ ສາກົນ ດ້ວຍຮູບແບບປົກກະຕິ ແລະ ຮູບແບບທາງໄກ; ເຂົ້າຮ່ວມຕ້ອນຮັບການເຂົ້າຢ້ຽມຂ່ຳນັບ ແລະ ອວຍພອນຂອງບັນດາຄະນະຜູ້ແທນຈາກຕ່າງປະເທດ ລວມທັງທູຕານຸທູດ ແລະ ອົງການຈັດຕັ້ງສາກົນ ທີ່ປະຈຳຢູ່ລາວ ທັງໄດ້ເຄື່ອນໄຫວຮ່ວມກັບກຳມາທິການຕ່າງປະເທດ ສພຊ ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃນຂົງເຂດວຽກງານການຕ່າງປະເທດ, ບັນດາສົນທິສັນຍາ ແລະ ສັນຍາສາກົນ ທີ່ ນວ.

ໂອກາດດັ່ງກ່າວ, ທ່ານ ບຸນທາມ ພຸດທະວົງສາ ຍັງໄດ້ກ່າວຕື່ມວ່າ: ນັບແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ IX ຮອດປັດຈຸບັນ, ສປນວ ໄດ້ນຳເອົາບັນດາມະຕິ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ບົດລາຍງານຕ່າງໆ ທີ່ໄດ້ນຳເຂົ້າພິຈາລະນາ ແລະ ຮັບຮອງເອົາໃນກອງປະຊຸມຂອງ ສພຊ ແລະ ສປນວ ໂດຍສະເພາະແມ່ນບັນດາມະຕິທີ່ໄດ້ຮັບຮອງເອົາໃນກອງປະຊຸມຂອງສະພາທັງສອງຂັ້ນ ຈຳນວນ 67 ສະບັບ, ກົດໝາຍ 11 ສະບັບ, ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນຂອງ ສພຊ ແລະ ສປນວ; ບັນດາເນື້ອໃນທີ່ກ່ຽວຂ້ອງກັບ 2 ວາລະແຫ່ງຊາດ ຄື: ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແລະ ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ພາລະບົດບາດຂອງສະພາທັງສອງຂັ້ນ ໂດຍຜ່ານການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຂອງ ສພຊ ແລະ ສປນວ ເຊິ່ງໄດ້ເຄື່ອນໄຫວຢູ່ຂັ້ນສູນກາງ, ຂັ້ນ ນວ, ຂັ້ນເມືອງ ແລະ ຂັ້ນບ້ານ ໄດ້ທັງໝົດ 156 ຈຸດ ແລະ ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 14.084 ຄົນ ຍິງ 5.842 ຄົນ.

# ຖະແຫລງຂ່າວການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ສະຫວັນນະເຂດ

(ສພຊ) ໃນຕອນບ່າຍວັນທີ 12 ກໍລະກົດ 2022 ທີ່ສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ, ຄະນະເລຂາທິການຂອງ ສພຂ ໄດ້ຈັດໃຫ້ມີການຖະແຫລງຂ່າວກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ເຊິ່ງຖະແຫລງຂ່າວໂດຍທ່ານ ພູທອນ ພຸດທະຂັນຕິ ເລຂາທິການ ສພຂ ສະຫວັນນະເຂດ ໄດ້ຖະແຫລງວ່າ: ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ຈະໄດ້ໄຂຂຶ້ນເປັນເວລາ 3 ວັນ ເລີ່ມແຕ່ຕອນເຊົ້າວັນພຸດທີ 27-29 ກໍລະກົດ 2022 ທີ່ຫໍວັດທະນະທຳໄກສອນພົມວິຫານ ແຂວງສະຫວັນນະເຂດ.



ໃນວາລະປະຊຸມຈະໄດ້ປຶກສາຫາລືວຽກງານສຳຄັນຕ່າງໆ ຄື: ວຽກອົງການປົກຄອງແຂວງ ເຊິ່ງຈະພິຈາລະນາຮັບຮອງເອົາການລາຍງານ ໂດຍສັງເຂບຂອງທ່ານເຈົ້າແຂວງສະຫວັນນະເຂດ ກ່ຽວກັບສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ, ຮັບຟັງການລາຍງານຈາກທ່ານຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022, ຮັບຟັງການລາຍງານຈາກທ່ານຫົວໜ້າພະແນກການເງິນແຂວງ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022, ຮັບຟັງການລາຍງານຈາກທ່ານຮອງເຈົ້າແຂວງສະຫວັນນະເຂດ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ ແລະ ການເງິນ, ຮັບຟັງການລາຍງານຈາກທ່ານຫົວໜ້າກອງບັນຊາການ ປກສ ແຂວງ ກ່ຽວກັບຄວາມຄືບໜ້າໃນການແກ້ໄຂບັນຫາຢາເສບຕິດ, ຮັບຟັງການລາຍງານຈາກທ່ານຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ ແຂວງສະຫວັນນະເຂດ ກ່ຽວກັບການຂຸດຄົ້ນແຮ່ທາດພາຍໃນແຂວງສະຫວັນນະເຂດ, ຮັບຟັງການລາຍງານຈາກທ່ານຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ກ່ຽວກັບການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ ໂດຍສະເພາະຂໍ້ຕົກລົງຂອງທ່ານເຈົ້າແຂວງສະຫວັນນະເຂດ ວ່າດ້ວຍການກຳນົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງທົ່ວແຂວງສະຫວັນນະເຂດ ແລະ ຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍການຮັບຮອງເອົາແຜນຈັດສັນທີ່ດິນເບື້ອງຕົ້ນຂອງແຂວງສະຫວັນນະເຂດຮອດປີ 2025, ຮັບຟັງການລາຍງານຂອງທ່ານຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ ກ່ຽວກັບການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຊັ້ນທຸກສາຍໃນໄລຍະໃໝ່. ພ້ອມນັ້ນ, ໃນກອງປະຊຸມຄັ້ງນີ້ ຍັງຈະໄດ້ພິຈາລະນາຮັບຮອງເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງ ສພຂ ແລະ ຮັບຟັງການລາຍງານຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການປະຕິບັດພາລະບົດບາດທົ່ວໄປຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ, ຮັບຟັງການລາຍງານຂອງປະທານສານປະຊາຊົນແຂວງ ແລະ ຮັບຟັງການລາຍງານຂອງທ່ານຫົວໜ້າພະແນກຍຸຕິທຳແຂວງອີກດ້ວຍ.



## ສຸກສະບາຍຫາຍໂຣຄາ

# ສັນຍານເຕືອນ ລູກຕິດສື່ສັງຄົມອອນລາຍ

**ແປ ແລະ ຮຽບຮຽງໂດຍ: ສາວແອ່ນ**



ປັດຈຸບັນ, ສື່ອອນລາຍໄດ້ກາຍເປັນປັດໃຈໜຶ່ງ ທີ່ເພີ່ມເຂົ້າມາໃນຊີວິດປະຈຳວັນຂອງທຸກໆຄົນ ບໍ່ວ່າຈະເປັນເດັກນ້ອຍ ຫລື ຜູ້ໃຫຍ່ ສະນັ້ນ, ພຶດຕິກຳໃນການໃຊ້ຊີວິດຂອງຄົນເຮົາ ຈຶ່ງມີການປ່ຽນແປງ ມີການເສບຕິດຈໍ, ເສບຕິດການໃຊ້ສື່ໃນໂທລະສັບ ຫລື ຄອມພິວເຕີຫລາຍຂຶ້ນ ເຊິ່ງອຸປະກອນເຫລົ່ານີ້ເຮັດໃຫ້ສາມາດເຂົ້າເຖິງຂໍ້ມູນຕ່າງໆ ໄດ້ຢ່າງງ່າຍດາຍ ແລະ ວ່ອງໄວ ເຊິ່ງລວມເຖິງສື່ສັງຄົມ ເຊັ່ນ Facebook, Twitter, Instagram ແລະອື່ນ ເພາະມັນມີຄວາມສະດວກສະບາຍທີ່ຈະເຂົ້າເຖິງຂໍ້ມູນຕ່າງໆ ໄດ້ຫລາຍ ຈຶ່ງເຮັດໃຫ້ມີຄວາມສ່ຽງເພີ່ມຂຶ້ນທີ່ຄົນເຮົາຈະເສບຕິດກັບສື່ເຫລົ່ານີ້ ໂດຍສະເພາະແມ່ນເຍົາວະຊົນ ເພາະວ່າເຂົ້າເຖິງໄດ້ໄວ ສາມາດຕອບສະໜອງຕາມຄວາມຕ້ອງການ ໃນການໃຊ້ຊີວິດໃນປະຈຸບັນໄດ້ ແຕ່ເຖິງຢ່າງໃດກໍຕາມບໍ່ໄດ້ໝາຍຄວາມວ່າຄົນທີ່ມີສະມາດໂຟນຢູ່ໃນມື ຈະເສບຕິດສື່ອອນລາຍທັງໝົດ ມັນຂຶ້ນຢູ່ກັບການຕັດສິນໃຈຂອງບຸກຄົນ ລວມທັງການສຶກສາອົບຮົມເພື່ອສ້າງລະບຽບວິໄນໃນການນຳໃຊ້ອິນເຕີເນັດ ຂອງພໍ່ແມ່ແກ່ເດັກຕາມຄວາມເໝາະສົມ.

**6 ສັນຍານຂອງການຕິດສື່ສັງຄົມອອນລາຍ**

- ຢູ່ໃນສື່ສັງຄົມອອນລາຍເປັນເວລາຫລາຍຊົ່ວໂມງຕິດຕໍ່ກັນ;
- ຈັບໂທລະສັບ ແລະ ເປີດເວັບ ຫລື ຄລິບວິດີໂອຕະຫລອດເວລາ ບໍ່ວ່າຈະເຮັດຫຍັງຢູ່ກໍຕາມ;
- ເມື່ອບໍ່ໄດ້ໃຊ້ສື່ເຫລົ່ານີ້ ຈະຮູ້ສຶກຫງຸດຫງິດ, ໃຈຮ້າຍ ແລະ ໂມໂຫງ່າຍ;
- ພະຍາຍາມທີ່ຈະຄວບຄຸມການເຂົ້າເຖິງສື່ສັງຄົມອອນລາຍ ແຕ່ບໍ່ສາມາດຄວບຄຸມໄດ້;
- ມັກໃຊ້ສື່ສັງຄົມອອນລາຍເພື່ອຜ່ອນຄາຍຄວາມຕຶງຄຽດ.
- ສຳລັບເດັກນ້ອຍ ຫລື ເດັກໃນໄວຮຽນ ຈະມີພຶດຕິກຳມັກຢູ່ໃນຫ້ອງ ແລະ ອາດມີພຶດຕິກຳຂີ້ຕົວະ ຫລື ປິດບັງ ເພື່ອທີ່ຈະໄດ້ຫລິ້ນສື່ສັງຄົມຫລາຍຂຶ້ນ.

ສັນຍານເຫລົ່ານີ້ ເປັນການເຕືອນວ່າ ສື່ສັງຄົມໄດ້ເຂົ້າມາຄອບງຳຊີວິດປະຈຳວັນ ແລະ ຖ້າໃຊ້ບໍ່ຖືກຕ້ອງ ຫລືບໍ່ເໝາະສົມ ອາດສົ່ງຜົນບໍ່ດີຕໍ່ຮຽນການ, ບ່ອນເຮັດວຽກ, ບັນຫາກັບໝູ່ເພື່ອນຄົນອ້ອມຂ້າງ ແລະ ຄອບຄົວ ຫລືບາງຄັ້ງມັນສາມາດກໍ່ໃຫ້ເກີດພະຍາດທາງຈິດໄດ້ເຊັ່ນກັນ ຮ້າຍແຮງກວ່ານັ້ນ ອາດພາໃຫ້ເກີດບັນຫາອາດຊະຍາກຳ, ຄວາມຮຸນແຮງທາງເພດ... ບາງເຫດການເຫລົ່ານີ້ ອາດເກີດຈາກການຕິດເກມຂອງເດັກນ້ອຍ, ເສບຕິດສື່ອອນລາຍ ເພາະວ່າເຫັນຕົວຢ່າງ ຫລື ພຶດຕິກຳກະຕຸ້ນທີ່ບໍ່ຖືກຕ້ອງ ແລະບໍ່ເໝາະສົມ ເນື່ອງຈາກບໍ່ໄດ້ຮັບການຄວບຄຸມດູແລ ແລະ ໃຫ້ຄຳແນະນຳຈາກພໍ່ແມ່ ຫລື ຜູ້ທີ່ຢູ່ອ້ອມຂ້າງໃນທາງທີ່ເໝາະສົມ ແລະ ຄວນຈະເປັນ.

## ສາລາກະວີ

# ບົດບາດແມ່ຍິງ

**# ໂດຍ: ດອກຂ່າ ຖິ່ນນາໂນນ**

✻ ແມ່ຍິງນາມຊື່ນີ້ ຄົງຄ່າຄວາມດີ
ເປັນສະຕີຂັນແຂງ ທຽບທັນບາທ້າວ
ວຽກໜັກເບົາທັນທ້າວ ສຸມໃຈກັນໃສ່
ງານຢູ່ໃສກໍຫາກແລ້ວ ສຳເລັດໄດ້ດັ່ງໝາຍ

✻ ບໍ່ວ່າການປູກເຂົ້າ ຖາງໄຮ່ໄຖນາ
ຕຳຜ້າໄມອາພອນ ປູກຝັງຂາຍຄ້າ
ມີວິຊາການກ້າວ ທັງຮຽນຂຽນເກັ່ງ
ການສອບເສັງເລື່ອນຊັ້ນ ບໍ່ມີຄ້າງຂອດຄາ

✻ ການທະຫານກໍຍິ່ງກ້າວ ທຽມເທົ່າຊຸມຊາຍ
ການກິລາທັງຫລາຍ ຍາດໄຊຊິງໄດ້
ຍ້ອນນາງເອົາຕົວຕັ້ງ ໃຈຈິງຂັນແຂ່ງ
ເຂັ້ມແຂງຢືນຕໍ່ສູ້ ບໍ່ມີຢ້ານຫວັ່ນເກງ ແທ້ນາ!

✻ ປະເພນີມີແຕ່ເຄົ້າ ຄຽງຄູ່ນວນນາງ
ນຸ່ງຖືຮຽງປະສານ ຕໍ່ເຕີມເອົາໄວ້
ທັງສິ້ນໄໝຜົມເກົ້າ ຜືນແພພາດບ່ຽງ
ເຂົ້າວັດພຽງພໍ່າພ້ອມ ຕອມຕຸ້ມບໍ່ໄລ

✻ ໃນເຄຫາຢູ່ຍັ້ງ ເຮືອນບ່ອນອາໄສ
ກໍຫາກໄວວາທຳ ຄ່ຳແລງຍັງເຊົ້າ
ປຸງແຕ່ງແກງທັງກ້ອຍ ຍໍມາຕົບແຕ່ງ
ເປັນໜຶ່ງແຮງຊ່ວຍຊວ້ານ ຄອບຄົວໃຫ້ຢູ່ເຢັນ ແທ້ນາ!

✻ ຄັນວ່າຂຽນຂີດຂໍ້ ຍໍຍົກສັກສີ
ບໍ່ອາດບັນຍາຍໝົດ ຄ່າຄຸນຈາຈໍ້
ຍັງມີຫລາຍກະດໍ້ ການກະທຳພົ້ນເດັ່ນ
ຊາວເດືອນເຈັດກ່າວເນັ້ນ ຍໍຍ້ອງໝູ່ຍິງ ຊອບແລ້ວ!



## ທັກທາຍ ລະບາຍ

**# ສາວຈົ້ມ**

### (ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

✻ **ຈົ່ມ**ເຊີຍສະພາປະຊາຊົນນະຄອນຫລວງວຽງຈັນ ທີ່ໄຂກອງປະຊຸມສະໄໝສາມັນ**ເທື່ອທີ 3** ລົງຢ່າງເປັນທາງການໃນວັນທີ 21 ຜ່ານມາ ໂດຍເພິ່ນກໍໄດ້ແຈ້ງເຊີນເອີ້ນຫາ **ນັກຂ່າວກົມສື່ມວນຊົນ**ຄົບສະພາແຫ່ງຊາດ ຢ່າງຄັກແນ່ ເພື່ອຕິດຕາມເກັບກຳຂໍ້ມູນຂ່າວສານຢ່າງໃກ້ຊິດຕິດແທດ ຈົ່ມແລ້ວມີຊື່ເອີ້ນ **ເຊດ 1 ນະຄອນຫລວງ** ຈັດວ່ອງໄວທັນໃຈ ບໍ່ໃຫ້ໃຜຊິແຫຍ້ ແລະ ອັນດັບຕໍ່ນັ້ນ **ແຂວງທົ່ວພັນເຊດ 8** ຕາມຕິດມາຕໍ່ດ້ອຍ **ສພຊ** ກໍ່ຝ່າຍ**ສະຫວັນ** (ເຊດ 13) **ວ່າເດ!**

✻ **ຂ່າວ**ບໍລິສັດ AIDC **ມອບສວນນໍ້າພຸຊຽງຍືນ** ຄືນໃຫ້ເປັນສະຖານທີ່ **ມໍລະດົກແຫ່ງຊາດລາວ** ເພາະມີປະຫວັດສາດຄຽງຄູ່ກັບຊາດມາຍາວນານ ເຊິ່ງໃນປີ **1920 ເປັນຕະຫລາດເຊົ້າ**ນະຄອນຫລວງວຽງຈັນ ແລະ ໃນປີ **1975 ນັ້ນ ກາຍເປັນວົງວຽນນໍ້າພຸ**ທີ່ມີທາງອ້ອມຮອບ ແລະ ໃນປີ **2000** ສະຖານທີ່ດັ່ງກ່າວ ກາຍເປັນ**ສວນນໍ້າພຸຮອດປັດຈຸບັນ** ເປັນສະຖານທີ່ສຳຄັນຄຽງຄູ່ຢູ່ກັບຊາດລາວ ເພື່ອຮັບແຂກຕ່າງດ້າວ ທ້າວຕ່າງແດນ ທັງພາຍໃນ ແລະ ຕ່າງປະເທດ ຫລາຍກວ່າ**ສາມໝື່ນຄົນຕໍ່ປີ** ຈາກນີ້ໄປພີ່ນ້ອງ ທັງຊາດ-ນະຄອນຫລວງ ຄົງສວ່າງສຸກສະບາຍໃຈ ມ່ວນໃນມະໃນແໝ້ງ ເຫັນບ່ອນເດີມດາກໍ່ມີຄວາມໝາຍປະຫວັດສາດກັບຄືນມາອາດເອີ ເມືອງບ້າຄູ່ນະຄອນ **ຊອບແລ້ວ!**

✻ **ໄຂ້**ຍຸງລາຍ ມີທ່າອ່ຽງລະບາດເພີ່ມຂຶ້ນຢ່າງຫລວງຫລາຍ ເຊິ່ງ**ພຽງອາທິດດຽວ**ມີຜູ້ເຊື້ອເຖິງ **538 ກໍລະນີ** ແລະ ຍິນວ່າໃນວັນທີ **20 ຜ່ານມານີ້** ມີຜູ້**ຕິດເຊື້ອ** ທັງໝົດ**ທົ່ວປະເທດ 10.469 ກໍລະນີ** ແລະ **ເສຍຊີວິດ 12 ຄົນ** ຈຶ່ງໃຫ້ມີສະຕິຕັ້ງ ເອົາໃຈໃສ່ປະຕິບັດ **5ປ ເປັນປະຈຳ** ດັ່ງກະຊວງສາທາເອົ້າ ເພື່ອໃຫ້ເຮົາປອດໄພພົ້ນ ໄຂ້ຍຸງລາຍຢຸດຕາຍເພີ່ມ ຈຶ່ງໃຫ້ພົງພີ່ນ້ອງ ປົກປ້ອງຕົນໃຫ້ປອດເຊື້ອເພາະຍຸງລາຍຮ້າຍກວ່າເສືອ **ແທ້ໃດ!**

## ຊອບຍິ້ມ

**# ແອ່ນຕຸ້ງ**

**ເລື່ອງ: ເອົ້າບໍ່ມ່ອນ**

ແມ່ຕູ້ສາ ພາຫລານໄປທ່ຽວສວນສັດ ແລະ ໃນຂະນະທີ່ເບິ່ງລີງ ຢູ່ນັ້ນ ຫລານກໍ່ຮ້ອງຂຶ້ນວ່າ:

**ຫລານ:** ປາດໆໆ ລີງຄືແມ່ຕູ້ແທ້

**ແມ່ຕູ້:** ຮຽນເອົ້າສຸພາບແດ່ແມະ ເປັນເດັກນ້ອຍຫັ້ນ

**ຫລານ:** ແຮ່ໆ ຫລານຂໍໂທດ ໄຄແຕ່ລີງບໍ່ເຂົ້າໃຈພາສາເນາະ ຄັນຊັ້ນມັນຄຽດໃຫ້ຫລານແລ້ວ

**ແມ່ຕູ້:** ???



**ຄະຕິເຕືອນໃຈ**

ຖ້ານກັບເມື່ອຍມັນເມື່ອຍເຂົ້າຫາກັນ

ໜີ່ນກັບພຽນມັນວຽນເຂົ້າຫາກັນ

**# ດອກສະຍອມ**

# ກົດໝາຍວ່າດ້ວຍຍານພາຫະນະທາງບົກ

ຕໍ່ຈາກສະບັບກ່ອນ...

**ມາດຕາ 82 ສິດ ແລະ ໜ້າທີ່ ຂອງຂະແໜງການປ້ອງກັນຄວາມສະຫງົບ**

ຂະແໜງການປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄ້ວາ, ສ້າງ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງບົກ ເພື່ອສະເໜີຂັ້ນເທິງພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງບົກ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງບົກ;
4. ປະສານສົມທົບກັບຂະແໜງການໂຍທາທິການ ແລະ ຂົນສົ່ງ, ຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຈັດຕັ້ງ ແລະ ປະຕິບັດວຽກງານຍານພາຫະນະທາງບົກ;
5. ກວດກາຂໍ້ມູນຍານພາຫະນະທາງບົກທີ່ຈະນຳໄປຜະລິດປ້າຍທະບຽນຍານພາຫານະ;
6. ຄຸ້ມຄອງ, ຜະລິດ ແລະ ຕິດປ້າຍທະບຽນຍານພາຫະນະ;
7. ຕິດຕາມ ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບຍານພາຫະນະທາງບົກ;
8. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຍານພາຫະນະທາງບົກ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 83 ສິດ ແລະ ໜ້າທີ່ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ**

ຂະແໜງການອຸດສາຫະກຳ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບຍານພາຫະນະທາງບົກ ເພື່ອສະເໜີຂັ້ນເທິງພິຈາລະນາ;
2. ໂຄສະນາ ເຜີຍແຜ່ ນະໂຍບາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງ ບົກ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ສັງຄົມ ຢ່າງທົ່ວເຖິງ;
3. ພິຈາລະນາການຂໍອະນຸຍາດ ນຳເຂົ້າ, ສົ່ງອອກ, ນຳເຂົ້າ ເພື່ອສົ່ງອອກຕໍ່ ແລ້ວຈຶ່ງແຈ້ງໃຫ້ຂະແໜງ ການ ການເງິນ ຮັບຊາບ;
4. ພິຈາລະນາການສະເໜີ ສ້າງຕັ້ງ, ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດຍານພາຫະ ນະທາງບົກ;
5. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ນຳສະເໜີລັດຖະບານ ເພື່ອກຳນົດ ແລະ ດັດສົມຫົວໜ່ວຍທຸລະກິດການນຳເຂົ້າ ແລະ ສົ່ງອອກ, ຈຳໜ່າຍຍານພາຫະນະທາງບົກ ໃຫ້ເໝາະສົມ ຕາມສະພາບການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;
6. ຮັບ ແລະ ແກ້ໄຂຄຳສະເໜີ ຂອງຜູ້ດຳເນີນທຸລະກິດຍານພາຫະນະທາງບົກ ແລະ ຜູ້ຊົມໃຊ້;
7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຍານພາຫະນະທາງບົກ ຕໍ່ຂັ້ນເທິງຊາບ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 84 ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

ໃນການຄຸ້ມຄອງວຽກງານຍານພາຫະນະທາງບົກ ອົງການປົກຄອງບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳ ກ່ຽວກັບວຽກງານຍານພາຫະນະທາງບົກ ໃຫ້ແກ່ປະຊາຊົນພາຍໃນຂອບເຂດບ້ານຂອງຕົນ;
2. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງກັບວຽກງານຍານພາ ຫະນະທາງບົກ;
3. ຢັ້ງຢືນເອກະສານທີ່ກ່ຽວຂ້ອງກັບຍານພາຫະນະທາງບົກ ເຊັ່ນ ໃບຢັ້ງຢືນທີ່ຢູ່, ການຊື້ ຂາຍ, ການຮັບປະກັນ ແລະ ອື່ນໆ;
4. ເກັບກຳຂໍ້ມູນ ແລະ ສະຖິຕິ ຍານພາຫະນະທາງບົກ ໃນຂອບເຂດບ້ານ

ອ່ານຕໍ່ສະບັບໜ້າ...




**ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນູຄຳ ພິພັດເສລີ**

5. ພາວະວິໄສ ໝາຍເຖິງ ການດຳເນີນຄະດີ ຕ້ອງຢູ່ບົນພື້ນຖານກົດໝາຍ ແລະ ຄວາມຍຸຕິທຳ ຂໍ້ມູນຫລັກຖານຕ້ອງໄດ້ມາຈາກເຫດການຕົວຈິງ ແລະ ບໍ່ສ້າງຂຶ້ນມາເອງ;

6. ພົນລະເມືອງ ໝາຍເຖິງ ຄົນລາວ, ຄົນບໍ່ມີສັນຊາດ, ຄົນຕ່າງດ້າວ ແລະ ຄົນຕ່າງປະເທດ;



## ຄະນະ ສສຊ...

ສະມາຊິກສະພາແຫ່ງຊາດ ໄດ້ຈັດກອງປະຊຸມແລກປ່ຽນບົດຮຽນການເຄື່ອນໄຫວວຽກງານລະຫວ່າງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ (ພາກກາງ ແລະ ໃຕ້) ໂດຍການເປັນປະທານຂອງທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ໂດຍການເຂົ້າຮ່ວມຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ທັງເປັນຜູ້ຊີ້ນຳວຽກງານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ; ມີປະທານ-ຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະພາປະຊາຊົນຂັ້ນແຂວງ, ບັນດາທ່ານຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ, ປະຈຳເຂດເລືອກຕັ້ງຂັ້ນເມືອງ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ ເຊິ່ງກອງປະຊຸມໄດ້ຮັບການສະໜັບສະໜູນທຶນຈາກອົງການເຮວວິຕັດ.

ກອງປະຊຸມ ໄດ້ຮັບຟັງການສະເໜີບົດກ່ຽວກັບການພົວພັນປະສານງານລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບຄະນະປະຈຳສະພາປະຊາຊົນຂັ້ນແຂວງ; ການສະເໜີບົດກ່ຽວກັບການພົບປະປະຊາຊົນຂອງສະມາຊິກສະພາແຫ່ງຊາດ; ບົດກ່ຽວກັບພາລະບົດບາດຂອງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ; ບົດປະກອບຄຳຄິດຄຳເຫັນກ່ຽວກັບວຽກງານຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນນະຄອນຫລວງວຽງຈັນ, ສະພາປະຊາຊົນແຂວງສະຫວັນນະເຂດ, ບົດລາຍງານຫຍໍ້ກ່ຽວກັບການຈັດຕັ້ງເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງທ່າພະບາດ ແຂວງບໍລິຄຳໄຊ, ເມືອງຕະໂອ້ຍ ແຂວງສາລະວັນ ແລະ ເມືອງໄຊຊະນະສົມບູນ ແຂວງຈຳປາສັກ. ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນໃສ່ບົດສະເໜີດັ່ງກ່າວ ແລະ ຮັບຟັງບົດຄຳເຫັນຂອງທ່ານຜູ້ຕາງໜ້າຈາກຈາກໂຄງການເຮວວິຕັດ.

ໂອກາດດັ່ງກ່າວ, ກອງປະຊຸມຍັງໄດ້ຮັບຟັງການໂອ້ລົມໃຫ້ທິດຊີ້ນຳຕໍ່ກອງປະຊຸມຈາກທ່ານ ຄຳໃບ ດຳລັດ ເຊິ່ງທ່ານໄດ້ເນັ້ນໃຫ້ເອົາໃຈໃສ່ບາງບັນຫາ ປັນຕົ້ນແມ່ນເພີ່ມທະວີຄວາມເປັນເຈົ້າການແຕ່ຫົວທີ ໃນການປະສານສົມທົບກັບຄະນະປະຈຳສະພາປະຊາຊົນຂັ້ນແຂວງໃນການຈັດຕັ້ງການທາບທາມຮ່າງກົດໝາຍຕ່າງໆ ຕາມແຜນການທີ່ຄະນະປະຈຳສະພາແຫ່ງຊາດ ວາງອອກໃນແຕ່ລະໄລຍະ, ໃຫ້ເປັນປົກກະຕິ ແລະ ຮັບປະກັນປະສິດທິພາບ-ປະສິດທິຜົນສູງຂຶ້ນກວ່າເກົ່າ; ເອົາໃຈໃສ່ປະສານສົມທົບກັບຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການກະກຽມ, ໂຄສະນາ, ເຜີຍແຜ່ແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂັ້ນທ້ອງຖິ່ນ ໃນແຕ່ລະໄລຍະ ໃຫ້ປະຊາຊົນບັນດາເຜົ່າ ຮັບຮູ້, ເຂົ້າໃຈຢ່າງທົ່ວເຖິງ, ເລິກເຊິ່ງຫລາຍກວ່າເກົ່າ ພ້ອມທັງປຸກລະດົມຄວາມເປັນເຈົ້າການເຂົ້າຮ່ວມຈັດຕັ້ງປະຕິບັດ; ປະສານສົມທົບກັບຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນການຄົ້ນຄວ້າ, ປະກອບຄຳເຫັນ ຕໍ່ບັນດາຮ່າງນິຕິກຳທີ່ສຳຄັນຂອງທ້ອງຖິ່ນ; ພ້ອມເຂົ້າຮ່ວມການໂຄສະນາເຜີຍແຜ່ ບັນດານິຕິກຳ ທີ່ສະພາປະຊາຊົນຂັ້ນແຂວງ, ອົງການປົກຄອງແຂວງ ແລະ ອົງການອື່ນໆທີ່ກ່ຽວຂ້ອງ ຂອງທ້ອງຖິ່ນຈັດຂຶ້ນ ຢ່າງເປັນປົກກະຕິ; ສືບຕໍ່ປະສານສົມທົບກັບຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນເຈົ້າການແຕ່ຫົວທີ ໃນການເກັບກຳຂໍ້ມູນ ຕໍ່ບັນຫາສຳຄັນຕ່າງໆ ເພື່ອເປັນບ່ອນອີງໃນການຊຸກຍູ້, ສົ່ງເສີມພາກສ່ວນກ່ຽວຂ້ອງປະຕິບັດໃຫ້ຖືກຕ້ອງ ແລະ ເຮັດໃຫ້ການພິຈາລະນາໃນກອງປະຊຸມສະພາແຫ່ງຊາດ ມີປະສິດທິຜົນສູງ; ເຂົ້າຮ່ວມ, ຄົ້ນຄວ້າ ແລະ ກະກຽມເນື້ອໃນຕ່າງໆ ເພື່ອປະກອບຄຳເຫັນ, ຕັ້ງຄຳຊັກຖາມຕໍ່ບັນດາເນື້ອໃນຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ໂດຍການສະໜອງຂໍ້ມູນຈາກໝູ່ຄະນະ ແລະ ມອບໝາຍໃຫ້ຮອງປະທານ ຫລື ສະມາຊິກສະພາແຫ່ງຊາດ ທ່ານໃດໜຶ່ງ ເປັນຕົວແທນໃນການປະກອບຄຳເຫັນ; ເອົາໃຈໃສ່ເຂົ້າຮ່ວມກັບຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາບັນດາອົງການລັດຂັ້ນທ້ອງຖິ່ນຂອງຕົນ ໃນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ, ມະຕິຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ບັນດານິຕິກຳໃຕ້ກົດໝາຍຂອງສູນກາງ ແລະ ທ້ອງຖິ່ນ ໃຫ້ທົ່ວເຖິງ, ເຂັ້ມຂຸ້ນຂຶ້ນກວ່າເກົ່າ ປະສານສົມທົບກັບຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາການອອກນິຕິກຳ ແລະ ການຈັດຕັ້ງປະຕິບັດວຽກງານຂອງອົງການປົກຄອງທ້ອງຖິ່ນ ເພື່ອໃຫ້ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳຂອງອົງການລັດຂັ້ນເທິງ; ລາຍຮັບ-ລາຍຈ່າຍງົບປະມານ ຂັ້ນທ້ອງຖິ່ນ ແລະ ເອົາໃຈໃສ່ເຂົ້າຮ່ວມກັບຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນການພິຈາລະນາແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງບຸກຄົນ ຫລື ການຈັດຕັ້ງ ໃຫ້ມີຄວາມວ່ອງໄວ, ຄ່ອງແຄ້ວ, ຍຸຕິທຳ ແລະ ມີປະສິດທິຜົນ.

(ສອນສັກ ວັນວິໄຊ)




## ປິດເທີມແລ້ວເຮັດຫຍັງດີ?

**ໂດຍ: ດັ້ນກົບເມກ**

ໄລຍະເດືອນ 7-9 ເປັນໄລຍະທີ່ຫລາຍໂຮງຮຽນຂອງລັດປິດເທີມ-ປິດການຮຽນ ເຊິ່ງພາລະໜ້າທີ່ການອົບຮົມບົ່ມນິດໃສກໍຕົກມາໃສ່ພໍ່ແມ່ ຫລື ຜູ້ປົກຄອງ ຫລາຍທ່ານ ກໍເລືອກທາງອອກດ້ວຍການນຳເອົາລູກໄປຮຽນເພີ້ມໂຮງຮຽນເອກະຊົນ, ບາງຄົນຮຽນພາສາຕ່າງປະເທດ..., ບາງຄົນພໍ່ແມ່ກະເປົາໜັກແດ່ກໍສົ່ງລູກໄປຮຽນໄລຍະສັ້ນຢູ່ຕ່າງປະເທດ ພໍ່ແມ່ບາງຄົນກໍເປີດໂອກາດໃຫ້ລູກຊ່ວຍເຫລືອທຸລະກິດຄອບຄົວ.

ບົດບາດການສອນ-ການເຝິກອົບຮົມມາລະຍາດ-ສິນທຳນັ້ນ ຜູ້ຂຽນຄິດວ່າ ພໍ່ແມ່ຜູ້ປົກຄອງຍັງຕ້ອງເອົາໃຈໃສ່ເປັນພິເສດ ເພາະເດັກນ້ອຍມັກຈະເຊື່ອຟັງພໍ່ແມ່ຢູ່ໃນຄອບຄົວກ່ອນຄູຢູ່ໂຮງຮຽນ ເພາະພໍ່ແມ່ມີອິທິພົນຕໍ່ພວກເຂົາເຈົ້າໂດຍກົງທັງການລ້ຽງດູ ແລະ ປະພຶດເປັນແບບຢ່າງ ຖ້າວ່າພໍ່ແມ່ ມີນິດໃສ ແລະ ພຶດຕິກຳເຫັນແກ່ໂຕ, ເຮັດອັນໃດກໍແຂ່ງຂັນໃຫ້ຕົນເອງໄດ້ກ່ອນໝູ່ສະເໝີຈຶ່ງຖືວ່າດີ ເຊິ່ງລວມເຖິງການຂັບຂີ່ລົດຕາມທ້ອງຖະໜົນ ແລະ ແຊງຕັດໜ້າຂໍແຕ່ໄດ້ໄປກ່ອນ.... ພຶດຕິກຳເຫັນແກ່ໂຕຫລືການເອົາປຽບຄົນອື່ນຕ່າງໆນັ້ນຈະສົ່ງຜົນກະທົບຕໍ່ຈິດໃຈຂອງລູກ ດັ່ງຄຳເວົ້າບູຮານສອນວ່າ: ເຊື້ອໝາກຕ້ອງບໍ່ຫ່ອນຫລົ່ນໄກກົກ ແນວຜົມດົກບໍ່ຫ່ອນເປັນຫົວລ້ານ....,

ປົດພາກຮຽນນີ້ ຜູ້ຂຽນຄິດວ່າ ພໍ່ແມ່ຜູ້ປົກຄອງ ຄວນຈະໃຊ້ເວລາທົບທວນ ພິຈາລະນາວ່າ: ເຮົາຄວນປູກຝັງຄ່ານິຍົມລູກຫລານແບບໃດແດ່ເຊັ່ນ:

1. ສ້າງໂອກາດໃຫ້ໄດ້ຮຽນຮູ້ຮີດຄອງປະເພນີ.
2. ສ້າງໂອກາດໃຫ້ເວລາພວກເຂົາ ໄດ້ຮຽນຮູ້ຄຸນຄ່າທາງສິນທຳ ໂດຍສົ່ງເສີມບົດບາດຄູສອນ ຫລື ຜູ້ມີໜ້າທີ່ສອນໂດຍກົງ ຄວນທົບທວນບົດບາດວ່າ: ສັງຄົມຕ້ອງການຫຍັງ ແລະ ຊາວໜຸ່ມເຍົາວະຊົນຕ້ອງການຫຍັງ ໝາຍຄວາມວ່າ ເຮົາແກ້ບັນຫາປາກທ້ອງຍຸກເສດຖະກິດຝືດເຄືອງກໍຕ້ອງໄດ້ເອົາໃຈໃສ່ເຍົາວະຊົນໄປພ້ອມກັນຖ້າຄົນໃຫຍ່ຂຶ້ນມາເປັນພຽງມະນຸດເສດຖະກິດ ແຕ່ໄຮ້ຈິດວິນຍານທາງສິນລະທຳ-ຮີດຄອງປະເພນີກໍຈະຍິ່ງເຮັດໃຫ້ຄົນເຮົາ, ມີຈິດໃຈແຫ້ງແລ້ງ ຫລືບາງທີກໍມີທ່າອ່ຽງສູງເປັນສັງຄົມແລ້ງນ້ຳໃຈ!




# ລົງມະຕິຮ່າງລັດຖະທຳມະນູນ ສະບັບໃໝ່ຂອງຕູນີເຊຍ

ແປ ແລະ ຮຽບຮຽງ: ນາງ ປາກາລັກ ພົມມີໄຊ



*ກ່ອນການລົງຄະແນນສຽງຕໍ່ຮ່າງລັດຖະທຳມະນູນສະບັບໃໝ່ຂອງຕູນີເຊຍ, ປະຊາຊົນຈຳນວນໜຶ່ງສະແດງຄວາມບໍ່ພໍໃຈຕໍ່ຮ່າງລັດຖະທຳມະນູນສະບັບດັ່ງກ່າວ ເພາະເຫັນວ່າເປັນຄວາມພະຍາຍາມທີ່ຈະຂະຫຍາຍອຳນາດຂອງປະທານາທິບໍດີ ແລະ ເປັນຜົນລົບຕໍ່ປະຊາທິປະໄຕຂອງປະເທດ.*

ອີງຕາມການລາຍງານຂ່າວເມື່ອວັນທີ 25 ກໍລະກົດ 2022 ໃຫ້ຮູ້ວ່າ: ປະເທດຕູນີເຊຍ ກຳລັງດຳເນີນການລົງປະຊາມະຕິຕໍ່ຮ່າງລັດຖະທຳມະນູນສະບັບໃໝ່ ໂດຍຈະເພີ່ມອຳນາດຂອງປະທານາທິບໍດີໃຫ້ສາມາດແຕ່ງຕັ້ງ ຫລືປົດຕຳແໜ່ງຄະນະລັດຖະບານໄດ້ຕາມຄວາມເໝາະສົມ ແລະ ຍັງສາມາດຂະຫຍາຍໄລຍະເວລາຂອງການປະກາດສະຖານະການສຸກເສີນຢ່າງບໍ່ມີກຳນົດ.

ຫລາຍອາທິດກ່ອນນີ້, ມີປະຊາຊົນຕູນີເຊຍຈຳນວນໜຶ່ງ ໄດ້ຈັບກຸ່ມຊຸມນຸມປະທ້ວງຢູ່ຖະໜົນຮາບິບ ບູຣກິບາ ເຊິ່ງເປັນຖະໜົນສາຍສຳຄັນຂອງນະຄອນຫລວງຕູນິສ ປະເທດຕູນີເຊຍ ເພື່ອສະແດງຄວາມບໍ່ພໍໃຈຕໍ່ຮ່າງລັດຖະທຳມະນູນສະບັບໃໝ່ ໂດຍເຂົາເຈົ້າບອກວ່າ ຮ່າງລັດຖະທຳມະນູນຂອງທ່ານ ກາອິສ ເຊອິດ ປະທານາທິບໍດີຕູນີເຊຍ ເປັນການເຮັດໃຫ້ການຄອບຄອງອຳນາດຂອງທ່ານຖືກຕ້ອງຕາມກົດໝາຍ ແລະ ຫລຸດບົດບາດຂອງລັດຖະສະພາ ແລະ ນາຍົກລັດຖະມົນຕີລົງ.

ໃນການປະທ້ວງ, ໄດ້ມີການປະທະກັນເປັນບາງຄັ້ງຄາວ ລະຫວ່າງຜູ້ຊຸມນຸມກັບຕຳຫລວດ ໂດຍເຈົ້າໜ້າທີ່ຕຳຫລວດໄດ້ໃຊ້ສະເປໝາກພິກເພື່ອຕອບໂຕ້ຜູ້ປະທ້ວງ.

ທ່ານ ກາອິສ ເຊອິດ ປະທານາທິບໍດີຕູນີເຊຍ ໄດ້ດຳລົງຕຳແໜ່ງເປັນປະທານາທິບໍດີຂອງຕູນີເຊຍ ເມື່ອໄດ້ຮັບການເລືອກຕັ້ງໃນປີ 2019 ເຊິ່ງໄລຍະຜ່ານມາ ທ່ານກໍໄດ້ຢັ້ງຢືນວ່າ ການສັ່ງໂຈະກອງປະຊຸມລັດຖະສະພາ ແລະ ປົດນາຍົກລັດຖະມົນຕີ ເປັນຄວາມຈຳເປັນເພື່ອປົກປ້ອງຕູນີເຊຍ ແລະ ປະຊາຊົນຕູນີເຊຍ.

**ແຫລ່ງຂ່າວ: PRACATAI**

# ສິງກະໂປ ຈະອອກກົດໝາຍ ຄວບຄຸມສະກຸນເງິນດິຈິຕອນໃນປະເທດ

ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ

*ທະນາຄານກາງຂອງສິງກະໂປ ຈະລາຍງານລາຍລະອຽດກ່ຽວກັບຂອບເຂດການເຮັດວຽກເພື່ອຮັບປະກັນວ່າທຸລະກິດຕ່າງໆມີການຄຸ້ມຄອງຢ່າງຖືກຕ້ອງ ລວມທັງມີການສົ່ງເສີມໃນລະບົບນິເວດຂອງປະເທດອີກດ້ວຍ.*

ຕາມການລາຍງານຂ່າວເມື່ອອາທິດຜ່ານມາ ໃຫ້ຮູ້ວ່າ: ທະນາຄານສິງກະໂປ ຈະເປີດເຜີຍແຜນການໃນເດືອນໜ້າກ່ຽວກັບລາຍລະອຽດແນວທາງສຳລັບສິງກະໂປທີ່ຈະກາຍເປັນສູນກາງສຳລັບບິດຄອຍ ແລະ ຫລຽນດິຈິຕອນ.

ໃນຂະນະທີ່ປະເທດຕ່າງໆກຳລັງຊອກຫາຄວາມເປັນໄປໄດ້ໃນການສ້າງຄວາມສຳພັນທີ່ເຂັ້ມແຂງກັບນັກລົງທຶນທີ່ຕ້ອງການດຳເນີນການໃນອຸດສາຫະກຳຫລຽນດິຈິຕອນ ແລະ ກາຍເປັນສູນກາງຕະຫລາດຊັບສິນດິຈິຕອນ.

ທ່ານ ຣາວີ ເມນອນ ກຳມະການບໍລິຫານຂອງທະນາຄານກາງສິງກະໂປ ກ່າວວ່າ: ໂດຍພື້ນຖານແລ້ວ ບໍລິສັດທີ່ອ້າງວ່າປະຕິບັດຕາມກົດລະບຽບໃນສິງກະໂປ ອາດຈະບໍ່ໄດ້ລົງທະບຽນຢ່າງຖືກຕ້ອງ ລວມທັງການບໍ່ປະຕິບັດຕາມແນວທາງຂອງທະນາຄານກາງ ຫລືຂັ້ນຕອນການອອກໃບອະນຸຍາດທີ່ເໝາະສົມ ແລະ ມີໂອກາດທີ່ຈະຢຸດເຊົາການຄຸ້ມຄອງທັງໝົດພາຍໃຕ້ການຊີ້ນຳຂອງທະນາຄານກາງກ່ອນທີ່ຈະລົ້ມລະລາຍ. ດັ່ງນັ້ນ, ທະນາຄານກາງ ຈຶ່ງກຳລັງຊອກຫາທັງການສົ່ງເສີມການດຳເນີນທຸລະກິດພາຍໃນຂອບເຂດອຳນາດຂອງຕົນເອງ ແລະ ດຳເນີນການຄຸ້ມຄອງຜູ້ບໍລິໂພກ ແລະ ສະພາບຕະຫລາດທີ່ໝັ້ນຄົງ.

ຢ່າງໃດກໍຕາມ, ທ່ານ ຣາວີ ເມນອນ ກ່າວຕື່ມວ່າ "ພວກເຮົາຈະອະທິບາຍຈຸດຢືນຂອງພວກເຮົາກ່ຽວກັບສະກຸນເງິນດິຈິຕອນ, stability-coins, blockchains, tokenization, smart contract ແລະ ຊັບສິນດິຈິຕອນທັງໝົດລວມທັງຄວາມສ່ຽງ, ທ່າແຮງ ແລະ ຂໍ້ບົກຜ່ອງທີ່ອາດຈະເກີດຂຶ້ນເພື່ອກຳນົດແນວທາງການພັດທະນາກົດລະບຽບທີ່ກຽມພ້ອມທີ່ຈະເປັນສູນກາງຂອງຊັບສິນດິຈິຕອນ".

**ແຫລ່ງຂ່າວ: https://siamblockchain.com/**




## ຫລາຍບັນຫາ...

ນວ, ປະທານສະພາປະຊາຊົນນະຄອນຫລວງວຽງຈັນ ເຂົ້າຮ່ວມໂດຍ ທ່ານ ປອ. ອາດສະພັງທອງ ສີພັນດອນ ເຈົ້າຄອງນະຄອນຫລວງ, ມີບັນດາທ່ານສະມາຊິກ ສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1, ສະມາຊິກສະພາປະຊາຊົນນະຄອນຫລວງ, ຫົວໜ້າພະແນກການ, ອົງການທຽບເທົ່າພະແນກ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ເຈົ້າເມືອງ, ພາກສ່ວນຂົງເຂດຕຸລາການ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ອານຸພາບ ຕູນາລົມ ໄດ້ກ່າວໄຂກອງປະຊຸມຢ່າງເປັນທາງການວ່າ: ປະຕິບັດຕາມມາດຕາ 60 ຂອງກົດ ໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ທີ່ກຳນົດກ່ຽວກັບກອງປະຊຸມສະໄໝສາມັນ ປະຈຳ 6 ເດືອນຕົ້ນປີ ຂອງສະພາປະຊາຊົນນະຄອນຫລວງວຽງຈັນ, ມື້ນີ້ ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນນະຄອນຫລວງວຽງຈັນ ຊຸດທີ II ໄດ້ໄຂຂຶ້ນຢ່າງເປັນທາງການ ໃນທ່າມກາງບັນຍາກາດທີ່ທົ່ວພັກ-ລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນ ຊາວນະຄອນຫລວງວຽງຈັນ ພວມສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ VIIຂອງອົງຄະນະພັກນະຄອນຫລວງ, ບັນດາມະຕິຂອງກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນນະຄອນຫລວງວຽງຈັນ, ໂດຍສະເພາະແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານປະຈຳປີ 2022 ທີ່ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ແລະ ການຟື້ນຟູຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ໃຫ້ຄືນສູ່ສະພາບປົກກະຕິ.

ໃນໄລຍະ 6 ເດືອນຕົ້ນປີຜ່ານມາ, ບັນດາອົງການຈັດຕັ້ງລັດອ້ອມຂ້າງນະຄອນຫລວງວຽງຈັນ ໄດ້ສຸມໃສ່ຈັດ ຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ປະຈຳປີ 2022 ຕາມມະຕິກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນະຄອນຫລວງວຽງຈັນ ຊຸດທີ II ຮັບຮອງເອົາ, ເຖິງວ່າພວກເຮົາກຳລັງຢູ່ໃນຊ່ວງໄລຍະເວລາທີ່ມີຄວາມຫຍຸ້ງຍາກທີ່ສຸດ ຂອງການພັດທະນາເສດຖະກິດ-ສັງຄົມ ໃນຫລາຍຂົງເຂດ, ຫລາຍລະດັບ ລວມທັງບັນດາຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຫລາຍປະການ ເປັນຕົ້ນສະພາບການແຜ່ລະບາດ ຂອງພະຍາດໂຄວິດ-19, ບັນດາຂໍ້ຂັດແຍ່ງຢູ່ໃນພາກພື້ນ ແລະ ສາກົນ, ອັດຕາເງິນເຟີ້, ການຂາດແຄນເງິນຕາ ແລະ ບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ການເພີ່ມຂຶ້ນຂອງລາຄາສິນຄ້າ ແລະ ນ້ຳມັນເຊື້ອໄຟ ເຊິ່ງໄດ້ສົ່ງຜົນກະທົບຕໍ່ ສປປລາວ ໃນຂອບເຂດທົ່ວປະເທດ, ໂດຍສະເພາະນະຄອນຫລວງວຽງຈັນ ເປັນຈຳນວນບໍ່ໜ້ອຍ. ແຕ່ເຖິງຢ່າງໃດກໍຕາມ, ພາຍໃຕ້ການຊີ້ນຳ-ນຳພາ ຂອງອົງຄະນະພັກ, ອົງການປົກຄອງ, ສະພາປະຊາຊົນນະຄອນຫລວງ ໄດ້ເຮັດໃຫ້ການຈັດຕັ້ງປະຕິບັດບັນດາຄາດໝາຍ ໃນແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ 6 ເດືອນຕົ້ນປີ 2022 ກໍຄືການປະຕິບັດ 2 ວາລະແຫ່ງຊາດ ທີ່ສະພາປະຊາຊົນຮັບຮອງເອົາ ໃຫ້ມີຄວາມຄືບໜ້າເປັນຢ່າງດີ, ເຊິ່ງສາມາດບັນລຸຄາດໝາຍ ທາງດ້ານເສດຖະກິດຈຳນວນໜຶ່ງ, ການຈັດຕັ້ງປະຕິບັດມາດຕະການປ້ອງກັນໂຄວິດ-19 ຢ່າງຈິງຈັງ ເຮັດໃຫ້ການແຜ່ລະບາດຂອງພະຍາດໂຄວິດ-19 ຫລຸດລົງ ແລະ ສາມາດຄວບຄຸມໄດ້. ການພັດທະນາຂອງນະຄອນຫລວງ ສືບຕໍ່ມີສະຖຽນລະພາບທາງດ້ານການເມືອງທີ່ໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ ໂດຍພື້ນຖານ, ມີສະພາບແວດລ້ອມ ແລະ ເງື່ອນໄຂ ທີ່ເອື້ອອຳນວຍໃຫ້ແກ່ການພັດທະນານະຄອນຫລວງວຽງຈັນ ໄດ້ກັບເຂົ້າສູ່ສະພາບເກືອບປົກກະຕິ ແລະຄ່ອຍໆດີຂຶ້ນເທື່ອລະກ້າວ.

ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນນະຄອນຫລວງວຽງຈັນ ຊຸດທີ II ຄັ້ງນີ້ ຈະໄດ້ພິຈາລະ ນາຮັບຮອງເອົາບັນດາເນື້ອໃນທີ່ສຳຄັນ ດັ່ງນີ້:

1. ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງທ່ານເຈົ້າຄອງນະຄອນຫລວງວຽງຈັນ ກ່ຽວກັບຜົນການຈັດ ຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງນະຄອນຫລວງວຽງຈັນ;

2. ຮັບຟັງການສະເໜີ ເພື່ອທາບທາມຄຳຄິດຄຳເຫັນກ່ຽວກັບບົດລາຍງານຄວາມຄືບໜ້າ ໃນການປັບປຸງຮ່າງ ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ຂອງນະຄອນຫລວງວຽງຈັນ;

3. ຮັບຟັງການລາຍງານຊີ້ແຈງ ບາງວຽກງານສຳຄັນ ຂອງອົງການປົກຄອງນະຄອນຫລວງວຽງຈັນ.

4. ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງສະພາປະຊາຊົນນະຄອນຫລວງວຽງຈັນ;

5. ຮັບຟັງການລາຍງານການຕິດຕາມກວດກາການນຳໃຊ້ 7 ມາດຕະການສະກັດກັ້ນ ຂອງອົງການສືບສວນ-ສອບສວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 136 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ໂດຍສະເພາະການແກ້ໄຂການລະເມີດກົດໝາຍໃນການພາງຕົວ, ກັກຕົວ ແລະ ການກັກຂັງພາງ ທີ່ບໍ່ຖືກຕ້ອງຕາມກົດໝາຍ ໃນໄລຍະ 6 ເດືອນຕົ້ນປີ 2022 ຂອງອົງການໄອຍະການປະຊາຊົນນະຄອນຫລວງວຽງຈັນ.

6. ຮັບຟັງການລາຍງານຂອງອົງການໄອຍະການປະຊາຊົນນະຄອນຫລວງວຽງຈັນ ກ່ຽວກັບການຈັດຕັ້ງປະຕິ ບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຢາເສບຕິດ ຕາມຂໍ້ຕົກລົງຂອງເຈົ້າຄອງນະຄອນຫລວງວຽງຈັນ ສະບັບເລກທີ 841/ຈນວ, ລົງວັນທີ 25 ຕຸລາ 2021. ໂດຍລົງເລິກການດຳເນີນຄະດີຢາເສບຕິດ ຢູ່ນະຄອນຫລວງ;

7. ຮັບຟັງກາລາຍງານ ຂອງສານປະຊາຊົນນະຄອນຫລວງວຽງຈັນ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຢາເສບຕິດ ຕາມຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫລວງວຽງຈັນ ສະບັບເລກທີ 841/ຈນວ, ລົງວັນທີ 25 ຕຸລາ 2021 ໂດຍລົງເລິກການດຳເນີນພິຈາລະນາຕັດສິນຄະດີຢາເສບຕິດ;

8. ພິຈາລະນາ ແລະ ຮັບຮອງເອົາ ການສະເໜີແຕ່ງຕັ້ງບຸກຄະລາກອນຂອງອົງການປົກຄອງນະຄອນຫລວງ ຈຳນວນໜຶ່ງ.

(ຂ່າວ: ນາງ ໄຊໂສພາພອນ; ຮູບ: ກົງທະນູຄຳ)

ທະນາຄານພັດທະນາລາວ LDB Bank

ທະນາຄານພົງສະຫວັນ Phongsavanh BANK

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພຶດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ